ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ທັນວາ 2025

ປີທີ 14

ສະບັບທີ 1046

ລາຍສັປະດາ

## ສູນທອນພິດສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່, ປະທານປະເທດ ໃນພິທີໂຮມຊຸມນຸມລະນຶກວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ



- ນ້ອມນະມັດສະການ ພຣະເຖຣາ ນຸເຖຣະ,

-ບັນດາສະຫາຍການນຳ, ອະດີດການນຳ ພັກ ແລະ ລັດ ທີ່ນັບຖື,

- ບັນດາສະຫາຍເພື່ອນມິດ, ພີ່ນ້ອງຮ່ວມຊາດ ທີ່ຮັກແພງທັງຫຼາຍ.

ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ຫາກໍສຳເລັດການສະເຫຼີມສະຫຼອງວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວຄົບຮອບ 50 ປີ ຢ່າງຟົດຟື້ນ, ມ່ວນຊື່ນ ແລະ ສືບຕໍ່ສ້າງຂະບວນການ

ອ່ານຕໍ່ໜ້າ 7



ແນວຄິດປະທານ

ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ໃນເວລາສັງເກດຕີລາຄາ, ເລືອກເຟັ້ນ ແລະ ຈັດວາງພະນັກງານນັ້ນ ຕ້ອງຫຼີກເວັ້ນບັນດາປາກົດການຂອງແນວຄິດຄັບແຄບ, ອະຄະຕິສ່ວນບຸກຄົນ, “ຮັກຫຼັງຊັງບ່ຽງ”, ແນວຄິດພັກພວກ, ເຫັນແກ່ເຊື້ອສາຍຕະກຸນ, ຍາດພີ່ນ້ອງ, ເພື່ອນຝູງ ຫຼື ຄົນທ້ອງຖິ່ນ, ຄົນເຜົ່າດຽວກັນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 171-172)

ຕ້ອງໃຫ້ບຸລິມະສິດແກ່ການສົ່ງຄົນຢູ່ທ້ອງຖິ່ນ ໄປສຶກສາຮ່ຳຮຽນ, ເຮັດແນວນີ້ກໍເພື່ອຫຼັງຈາກຮຽນຈົບແລ້ວ ເຂົາກໍຈະກັບຄືນເມືອເຮັດວຽກຢູ່ທ້ອງຖິ່ນຂອງເຂົາເອງ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 172-173)

ອ່ານຕໍ່ສະບັບໜ້າ

## ວາງກະຕ່າດອກໄມ້ ໃນໂອກາດວັນເກີດ ປະທານ ໄກສອນ ພົມວິຫານ



(ສພຊ)-ວັນທີ 12 ທັນວານີ້, ການນຳຂັ້ນສູງພັກ-ລັດ ນຳໂດຍສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ວາງກະຕ່າດອກໄມ້ຕໍ່ໜ້າຮູບປັ້ນຫຼໍ່ປະທານ ໄກສອນ ພົມວິຫານ ເນື່ອງໃນໂອກາດວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ (13

ອ່ານຕໍ່ໜ້າ 4

## ການນຳພັກ-ລັດ ແລະ ມວນຊົນຊາວ ນວ ຮ່ວມໃສ່ບາດ ອຸທິດເຖິງດວງວິນຍານປະທານ ໄກສອນ ພົມວິຫານ



(ສພຊ)-ວັນທີ 13 ທັນວານີ້, ບັນດາການນຳ, ອະດີດການນຳຂັ້ນສູງພັກ-ລັດນຳໂດຍທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ພ້ອມດ້ວຍພັນລະຍາ ແລະ ມວນຊົນຊາວນະຄອນຫຼວງວຽງຈັນ (ນວ) ໄດ້ຮ່ວມໃສ່ບາດຖວາຍ

ອ່ານຕໍ່ໜ້າ 2

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນທັນວາ 2025




(ສພຊ)-ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນທັນວາ 2025 ໄດ້ດຳເນີນຂຶ້ນໃນວັນທີ 18-19 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ;

ອ່ານຕໍ່ໜ້າ 8

## ປະທານສະພາແຫ່ງຊາດ ຕ້ອນຮັບການຢ້ຽມຂ່ຳນັບຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດຫວຽດນາມ



(ສພຊ)-ວັນທີ 18 ທັນວາຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງສະຫາຍ ຫງວຽນ ຮຸຍ ຕຽນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສສ.ຫວຽດນາມ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢ່າງເປັນທາງການຢູ່ສປປລາວ.

ອ່ານຕໍ່ໜ້າ 12

## ສສຊ ເຂດເລືອກຕັ້ງທີ 13 ປະຊຸມປະຈຳປີ 2025




ອ່ານຕໍ່ໜ້າ 8



ຜັກດີ ແລະ ຜັກເສຍ... (ໜ້າ 9)



ສະພາແຫ່ງຊາດ... (ໜ້າ 10)

ພັດທະນາເສດຖະກິດ... (ໜ້າ 12)

# ປະທານ ໄກສອນ ພົມວິຫານ



ປະທານ ໄກສອນ ພົມວິຫານ ແມ່ນນັກຮັກຊາດຜູ້ຍິ່ງໃຫຍ່, ມີນ້ຳໃຈເສຍສະຫຼະສູງສົ່ງ,ນັກປະຕິວັດສຸດກົກສຸດປາຍ ແລະ ຮັບໃຊ້ປະຊາຊົນໝົດຈິດໝົດໃຈ, ມີຄວາມດຸໝັ່ນພາກພຽນ ຊອກຮູ້ຮ່ຳຮຽນຢ່າງບໍ່ຢຸດຢັ້ງ, ມີທັດສະນະມະຫາຊົນ, ເປັນຄັນທຸງໃນການເຕົ້າໂຮມຄວາມສາມັກຄີ ແລະ ມີນ້ຳໃຈສາກົນອັນຜ່ອງໃສ; ບັນດາແບບຢ່າງຄຸນສົມບັດຂອງປະທານ ໄກສອນ ພົມວິຫານ ເຊິ່ງພວກເຮົາຈະໄດ້ພ້ອມກັນສືບຕໍ່ສຶກສາຮ່ຳຮຽນດ້ວຍຄວາມຕັ້ງໜ້າ ແລະ ຮັບຜິດຊອບສູງ ດັ່ງນີ້:

1. ແບບແຜນວິທີເຮັດວຽກຢ່າງມີຫຼັກການ ເປັນຕົ້ນ: ແບບແຜນໃນການຊີ້ນຳ-ນຳພາ, ຢຶດໝັ້ນຫຼັກການຂອງພັກ,ການເຮັດວຽກມີການວາງແຜນ,ເຮັດວຽກມີລະບົບການແບ່ງງານ-ແບ່ງຄວາມຮັບຜິດຊອບ, ມີການສະຫຼຸບສ່ອງແສງ, ລາຍງານຢ່າງເປັນລະບົບ ແລະ ມີການຕິດຕາມກວດກາຢ່າງຮອບຄອບ ແລະ ຕໍ່ເນື່ອງ;

2. ແບບແຜນວິທີເຮັດວຽກທີ່ມີລັກສະນະວິທະຍາສາດ: ວິທະຍາສາດໝາຍເຖິງຄວາມຈິງ, ການເຮັດວຽກຕ້ອງສະແດງອອກຕາມຄວາມຈິງພາວະວິໄສ,ເຮັດວຽກຕ້ອງໄດ້ອີງໃສ່ມະຕິ, ມີມະຕິແລ້ວ ກໍຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເອກະພາບ,ທິດສະດີໄປພ້ອມກັບພຶດຕິກຳ, ພຶດຕິກຳຕ້ອງໄດ້ພິສູດເຖິງຄວາມຖືກຕ້ອງທາງດ້ານທິດສະດີ, ເວົ້າໄປຄຽງຄູ່ກັບການກະທຳ;

3.ຄຸນສົມບັດສິນທຳປະຕິວັດ, ເຝິກຝົນຫຼໍ່ຫຼອມນ້ຳໃຈຮັກຊາດ, ນ້ຳໃຈເສຍສະຫຼະອັນສູງສົ່ງ, ຈິດໃຈປະຕິວັດສຸດກົກສຸດປາຍ, ມານະຈິດປະຕິວັດອັນເດັດດ່ຽວໜຽວແໜ້ນ,ຮ່ຳຮຽນເອົາທັດສະນະມະຫາຊົນ, ເຄົາລົບນັບຖືປະຊາຊົນ, ຍົກສູງສະຕິຮັກຊາດເອກະລາດເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ;

4. ຮ່ຳຮຽນເອົານ້ຳໃຈປະຢັດມັດທະຍັດ, ຄວາມດຸໝັ່ນໃນການອອກແຮງງານ,ຮ່ຳຮຽນເອົາຄວາມດຸໝັ່ນຂະຫຍັນພຽນ, ການຊອກຮູ້ຮ່ຳຮຽນຢ່າງບໍ່ຢຸດຢັ້ງດ້ວຍການຢຶດໝັ້ນທິດນຳທີ່ວ່າ: "ຮຽນແລ້ວຮຽນອີກ ຮຽນເລື້ອຍໆໄປ", ຮຽນນຳຕຳລາຮຽນ, ຮຽນນຳໝູ່ຄະນະ, ຜູ້ອາວຸໂສ, ນຳປະຊາຊົນ, ນຳພຶດຕິກຳຕົວຈິງ, ໝັ່ນຊອກຮູ້ຮ່ຳຮຽນ ແລະ ສະແຫວງຫາຄວາມຮູ້ບົດຮຽນໃໝ່ຢູ່ສະເໝີ;

5.ຖືເອົາແບບຢ່າງຄວາມສາມັກຄີເປັນບັນຫາໃຈກາງໃນການພັດທະນາອົງການແລະປະເທດຊາດ ດ້ວຍການເພີ່ມທະວີຄວາມສາມັກຄີພາຍໃນ ແລະ ຕ່າງປະເທດໃຫ້ແໜ້ນແຟ້ນ, ເພື່ອສ້າງໄດ້ກຳລັງທີ່ເຂັ້ມແຂງແນໃສ່ຮັບໃຊ້ແກ່ການປົກປັກຮັກສາແລະສ້າງສາປະເທດຊາດຂອງພວກເຮົາໃນປັດຈຸບັນແລະອະນາຄົດ.

ປະທານ ໄກສອນ ພົມວິຫານ ຍືນຍົງໃນພາລະກິດຂອງພັກເຮົາ ແລະ ຈະປະທັບຢູ່ໃນດວງໃຈຂອງປະຊາຊົນລາວ ຕະຫຼອດໄປ!

**ຄັດຈາກ:** ເອກະສານໂຄສະນາ-ປາຖະກະຖາ ເນື່ອງໃນວັນສະຖາປະນາສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ.



## ການນຳ...

(ຕໍ່ຈາກໜ້າ 1)

ສັງຄະທານແດ່ພະສົງສາມະເນນ 105 ອົງ ຢູ່ພິພິທະພັນ ປະທານ ໄກສອນ ພົມວິຫານ ເພື່ອອຸທິດເຖິງປະທານ ໄກສອນພົມວິຫານ ເນື່ອງໃນໂອກາດວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ (13/12/1920-13/12/2025).

ການໃສ່ບາດຖວາຍສັງຄະທານໃນຄັ້ງນີ້, ເພື່ອອຸທິດສ່ວນບຸນ, ສ່ວນກຸສົນ ເຖິງດວງວິນຍານຂອງບັນພະບຸລຸດ ກໍຄືປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ,ຜູ້ນຳພາກໍ່ຕັ້ງ, ທະນຸບຳລຸງ ພັກປະຊາຊົນປະຕິວັດລາວ, ຜູ້ນຳພາສ້າງຕັ້ງກຳລັງປະກອບອາວຸດປະຕິວັດຂອງປະຊາຊົນ, ນຳພາຂະບວນການຕໍ່ສູ້ກູ້ຊາດ, ນຳເອົາເອກະລາດ, ອິດສະຫຼະພາບ ມາສູ່ປະເທດຊາດ ສາມາດສະຖາປະນາ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນວັນທີ 2 ທັນວາ 1975 ຢ່າງສະຫງ່າຜ່າເຜີຍ ຈົນມາຮອດປັດຈຸບັນ;ພ້ອມນີ້,ຍັງເປັນການອຸທິດສ່ວນບຸນກຸສົນໃຫ້ສຳພະເວສີ (ຜີເຜດ) ຫຼື ໃຫ້ຍາດຕິພີ່ນ້ອງ, ເຈົ້າກຳນາຍເວນ, ຜີໄຮ້ຍາດຂາດມິດ, ເພື່ອນມິດສະຫາຍທີ່ໄດ້ລ່ວງລັບໄປແລ້ວ ເພື່ອເປັນບຸນ, ເປັນກຸສົນ ແລະ ອື່ນໆ.

# ສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ສພຂ ສະຫວັນນະເຂດ




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ຊຸດທີ IV ໄດ້ໄຂຂຶ້ນຢ່າງເປັນທາງການໃນວັນທີ 16 ທັນວາ ແລະ ອັດລົງດ້ວຍຜົນສຳເລັດອັນຈົບງາມ ໃນວັນທີ 18 ທັນວານີ້ ທີ່ຫໍວັດທະນະທຳໄກສອນ ພົມວິຫານ ພາຍໃຕ້ການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ,ທ່ານບຸນໂຈມ ອຸບົນປະເສີດ ເລຂາຄະນະບໍລິຫານງານພັກແຂວງ,ບັນດາການນຳຂອງແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳແຕ່ລະເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າພະແນກການ, 2 ກອງບັນຊາການ, ອົງການທຽບເທົ່າອ້ອມຂ້າງແຂວງ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ຮັບຟັງບົດລາຍງານວຽກງານຂອງອົງການປົກຄອງແຂວງ, ບົດສະເໜີຂອງທ່ານເຈົ້າແຂວງ ກ່ຽວກັບການຮັບຮອງເອົາກົງຈັກການຈັດຕັ້ງ ແລະ ສະເໜີແຕ່ງຕັ້ງບຸກຄະລາກອນ; ບັນດາບົດລາຍງານຂອງອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກກາງ 2, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ສະພາປະຊາຊົນແຂວງແລະຮ່າງມະຕິກອງປະຊຸມ ວ່າດ້ວຍການຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານແຫ່ງລັດຂອງແຂວງ; ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ໄດ້ພ້ອມກັນທຸ່ມເທເຫື່ອແຮງ, ສະຕິປັນຍາ, ເສີມຂະຫຍາຍສິດປະຊາທິປະໄຕ ເຂົ້າໃສ່ການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນ, ພິຈາລະນາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ເຊິ່ງໄດ້ຮັບຮອງອອກເປັນມະຕິກອງປະຊຸມ ສພຂ ດັ່ງນີ້:

1. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ 5 ປີ ຄັ້ງທີ IX (2021-2025), ບົດລາຍງານປີ 2025 ແລະ ທິດທາງແຜນການປີ 2026;

2. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ;

3. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ;

4. ມະຕິວ່າດ້ວຍການຮັບຮອງເອົາການສະເໜີສ້າງຕັ້ງຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ ເປັນອົງການທຽບເທົ່າພະແນກຂັ້ນແຂວງ;

5. ມະຕິວ່າດ້ວຍການຮັບຮອງເອົາການສະເໜີສ້າງຕັ້ງຕາແສງໃນທົ່ວແຂວງສະຫວັນນະເຂດ;

6. ມະຕິວ່າດ້ວຍການຮັບຮອງເອົາການສະເໜີແຕ່ງຕັ້ງທ່ານແສນສັກ ພົມວົງສາເປັນປະທານອົງການກວດກາລັດແຂວງ;

7. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ບົດລາຍງານປີ 2025 ແລະ ທິດທາງແຜນການປີ 2026, ບົດລາຍງານແກ້ໄຂຜົນການກວດກາຕາມມະຕິກອງປະຊຸມສະພາປະຊາຊົນແຂວງຂອງອົງການກວດກາລັດແຂວງ;

8. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 3 ປີ (2023-2025), ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກກາງ 2;

9. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ບົດລາຍງານປີ 2025 ແລະ ທິດທາງແຜນການປີ2026ຂອງອົງການໄອຍະການປະຊາຊົນແຂວງ;

10. ມະຕິວ່າດ້ວຍການຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ບົດລາຍງານປີ 2025 ແລະ ທິດທາງແຜນການປີ 2026 ຂອງສານປະຊາຊົນແຂວງ;

11. ມະຕິວ່າດ້ວຍການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V.



# ເຜີຍແຜ່ມະຕິການເຄື່ອນໄຫວວຽກງານສາຍດ່ວນ




(ສພຊ) - ໃນວັນທີ 12-14 ທັນວາ 2025 ຜ່ານມາ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຜີຍແຜ່ມະຕິ ເລກທີ 167/ຄປຈ, ລົງວັນທີ 6/6/2025 ວ່າດ້ວຍການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຍັງມີບັນດາທ່ານຮອງເລຂາທິການສະພາແຫ່ງຊາດ, ບັນດາຜູ້ຕາງໜ້າຈາກຄະນະເລຂາທິການສະພາປະຊາຊົນແຂວງ 6 ແຂວງພາກກາງ ແລະ ພາກໃຕ້ຄື: ແຂວງຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ແລະ ຄະນະຮັບຜິດຊອບກອງປະຊຸມ ແລະ ຜູ້ຕາງໜ້າໂຄງການຊ່ວຍເຫຼືອລ້າຂອງສະພາແຫ່ງຊາດ.

ກອງປະຊຸມຄັ້ງນີ້ ໄດ້ມີການເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍວຽກງານສາຍດ່ວນ, ການແລກປ່ຽນຄຳຄິດຄຳເຫັນໃນການຈັດຕັ້ງປະຕິບັດມະຕິແລະການແລກປ່ຽນປະສົບປະການໃນໄລຍະຜ່ານມາ. ນອກນັ້ນ, ກອງປະຊຸມຍັງໄດ້ຮັບຟັງການສະເໜີຮ່າງຄູ່ມືສາຍດ່ວນ; ຄວາມໝາຍຄວາມສຳຄັນຂອງການຈັດຕັ້ງປະຕິບັດວຽກງານສາຍດ່ວນ; ຄວາມຮູ້ພື້ນຖານກ່ຽວກັບວຽກງານສາຍດ່ວນ; ວິທີການກວດກາວຽກງານສາຍດ່ວນ, ການແຍກປະເພດສາຍດ່ວນຕາມຂົງເຂດ, ການລາຍງານແຈ້ງຕອບຕໍ່ຄຳສະເໜີຂອງປະຊາຊົນ.

ທັງໝົດນີ້ ກໍເພື່ອຍົກສູງຄຸນນະພາບໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນວຽກງານສາຍດ່ວນ.

ໃນກອງປະຊຸມຄັ້ງນີ້, ຍັງມີທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ຕີລາຄາສູງຄວາມສຳຄັນ ແລະ ຈຳເປັນຂອງວຽກງານສາຍດ່ວນ ເຊິ່ງເປັນບ່ອນສັງລວມເອົາຄຳຄິດເຫັນ, ຄຳສະເໜີຂອງປະຊາຊົນ ຜູ້ມີສິດເລືອກຕັ້ງ ທີ່ມີຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ບັນດາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ ເພື່ອໃຫ້ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ມີການພິຈາລະນາແກ້ໄຂໃຫ້ທັນເວລາ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ເພີ່ມທະວີຄວາມຮັບຜິດຊອບໃນວຽກງານນີ້, ໂດຍໃຫ້ມີການປັບປຸງບາງວຽກງານເຊັ່ນ: ວຽກງານສັງລວມບັນດາຂໍ້ມູນໃຫ້ຈະແຈ້ງຊັດເຈນ, ພະນັກງານສາຍດ່ວນຕ້ອງມີມະນຸດສຳພັນດີ, ມີການແຍກບັນດາຂໍ້ສະເໜີຜ່ານສາຍດ່ວນໄປຕາມຂົງເຂດວຽກງານ, ຂະແໜງການ, ທ້ອງຖິ່ນ ເພື່ອໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ເພີ່ມທະວີການປະສານສົມທົບກັບພາກສ່ວນກ່ຽວຂ້ອງເພື່ອຊຸກຍູ້ຕິດຕາມການແກ້ໄຂຕາມລັກສະນະເຄັ່ງຮ້ອນ, ຮີບດ່ວນ ຂອງບັນຫາ ແລະ ມີການລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ.



# ການເຮັດບັດປະຈຳຕົວດິຈິຕອນໃນຂອບເຂດທົ່ວປະເທດ

(ສພຊ) - ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ, ກະຊວງປ້ອງກັນຄວາມສະຫງົບ (ປກສ) ໄດ້ແຈ້ງໃຫ້ບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ໄປເຮັດບັດປະຈຳຕົວດິຈິຕອນ ຢູ່ຕາມຈຸດບໍລິການຄື: ຂັ້ນສູນກາງ ຢູ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖາກ; ຂັ້ນທ້ອງຖິ່ນ ຢູ່ກອງບັນຊາການ ປກສ ນະຄອນຫຼວງ, ແຂວງ ແລະ ເມືອງ-ນະຄອນ ບ່ອນທີ່ຕົນເອງໄດ້ຈົດທະບຽນສຳມະໂນຄົວ ນັບຕັ້ງແຕ່ວັນທີ 17 ທັນວາເປັນຕົ້ນໄປ. ປັດຈຸບັນ, ກົມຄຸ້ມຄອງສຳມະໂນຄົວແລະກໍ່ສ້າງຮາກຖານ ໄດ້ກະກຽມຄວາມພ້ອມຮອບດ້ານເພື່ອເປີດບໍລິການໃນຂອບທົ່ວປະເທດ ໂດຍໄດ້ສົ່ງກຳລັງໄປຊ່ວຍເຫຼືອບັນດາ ປກສ ຂັ້ນແຂວງ, ຂັ້ນເມືອງ-ນະຄອນ ໃນການຈັດຕັ້ງປະຕິບັດວຽກງານນີ້ ເພື່ອເກັບກຳຂໍ້ມູນສຳມະໂນຄົວ ແລະອອກບັດປະຈຳຕົວດິຈິຕອນ ເລີ່ມແຕ່ວັນທີ 17 ທັນວາເປັນຕົ້ນໄປ.

ການປະກອບເອກະສານຂໍອອກບັດປະຈຳຕົວຂອງພົນລະເມືອງ ແມ່ນກະກຽມຄື: ປຶ້ມສຳມະໂນຄົວ, ບັດປະຈຳຕົວແບບເກົ່າ (ບັດສີຂຽວ), ອັດສຳເນົາພັດສະປອດ (ຖ້າມີ) ເພື່ອເປັນເອກະສານຢັ້ງຢືນຕົວຕົນ; ການນຸ່ງຖື ແມ່ນນຸ່ງເສື້ອສຸພາບມີຄໍ (ຍົກເວັ້ນເສື້ອສີຂາວ) ເພາະຈະເຮັດໃຫ້ຮູບຖ່າຍເຂົ້າໃນບັດປະຈຳຕົວບໍ່ງາມ.

**ເພຈຄວາມສະຫງົບ**
**Lao Security News**

# ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ຕ້ອນຮັບການຢ້ຽມຂໍ່ານັບຂອງເລຂາທິການໃຫຍ່ສະມາຄົມມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ



(ສພຊ) - ຕອນເຊົ້າວັນທີ 15 ທັນວາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການຍຸຕິທຳ, ປະທານຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຊາຊາກິ ທາໂລະ ເລຂາທິການໃຫຍ່ສະມາຄົມມິດຕະພາບລັດຖະສະພາ ຍີ່ ປຸ່ນ-ລາວ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ສປປລາວ; ການມາຢ້ຽມຢາມ ແລະ ພົບປະຄັ້ງນີ້ ແມ່ນຢູ່ໃນທ່າມກາງບັນຍາກາດທີ່ສອງປະເທດ ພວມມີການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດລະຫວ່າງ ສປປລາວ ແລະ ຍີ່ປຸ່ນ ຄົບຮອບ 70 ປີ ແລະ 10 ປີ ແຫ່ງການຍົກລະດັບການພົວພັນເປັນຄູ່ຮ່ວມຍຸດທະສາດຮອບດ້ານ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນການເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນດີງາມທີ່ມີມາດົນນານລະຫວ່າງສອງປະເທດ ໃຫ້ແຕກດອກອອກຜົນແລະແໜ້ນແຟ້ນຍິ່ງຂຶ້ນ ເວົ້າລວມ, ເວົ້າສະເພາະແມ່ນລະຫວ່າງສອງອົງການນິຕິບັນຍັດ ເຊິ່ງໄດ້ນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນສອງຊາດ ລາວ-ຍີ່ປຸ່ນ.

ໃນການພົບປະ, ທັງສອງຝ່າຍໄດ້ແຈ້ງໃຫ້ຮູ້ກ່ຽວກັບສະພາບການທີ່ພົ້ນເດັ່ນໃນການພັດທະນາເສດຖະກິດ-ສັງຄົມ, ການເຄື່ອນໄຫວວຽກງານລັດຖະສະພາ ໃຫ້ກັນແລະກັນຊາບໂດຍສັງເຂບ ພ້ອມທັງປຶກສາຫາລືກ່ຽວກັບການສືບຕໍ່ພົວພັນຮ່ວມມືລະຫວ່າງຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ກັບ ສະມາຄົມມິດຕະພາບລັດຖະສະພາ ຍີ່ປຸ່ນ-ລາວ ເພື່ອແລກປ່ຽນບົດຮຽນຕ່າງໆນຳກັນໃນຂົງເຂດນິຕິບັນຍັດ, ການຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດບັນດາສົນຍາ, ຂໍ້ຕົກລົງ ແລະ ໂຄງການທີ່ລັດຖະບານຂອງສອງປະເທດໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳຍິ່ງຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດ ລາວ-ຍີ່ປຸ່ນ ກໍຄືເພື່ອສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ສາກົນ.

ຕອນຄ່ຳວັນດຽວກັນທີ່ເຮືອນພັກເອກອັກຄະລັດຊະທູດຍີ່ປຸ່ນ ປະຈຳ ສປປລາວ ໄດ້ຈັດງານລ້ຽງສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນທາງການທູດລະຫວ່າງ ລາວ-ຍີ່ປຸ່ນ ຄົບຮອບ 70 ປີ ແລະ ຈັດການຍ້ອງຍໍໃຫ້ແກ່ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ; ງານລ້ຽງໃນຄັ້ງນີ້ ຈັດຂຶ້ນເພື່ອເປັນການສະຫຼຸບປີສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນການທູດລະຫວ່າງ ລາວ-ຍີ່ປຸ່ນ ຄົບຮອບ 70 ປີ ໃນປີ 2025.

ທ່ານ ໂຄອິ ຊຸມິ ເອກອັກຄະລັດຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ປະເທດຍີ່ປຸ່ນ ປະຈຳ ສປປລາວ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ສອງປະເທດໄດ້ມີການຈັດກິດຈະກຳຕ່າງໆ ທັງຢູ່ປະເທດຍີ່ປຸ່ນແລະຢູ່ສປປ ລາວ ເພື່ອສະເຫຼີມສະຫຼອງປີທີ່ມີຄວາມໝາຍສຳຄັນທາງປະຫວັດສາດແຫ່ງການພົວພັນການທູດຂອງສອງປະເທດ ເຊິ່ງອັນພົ້ນເດັ່ນແມ່ນການມາຢ້ຽມຢາມປະເທດລາວຂອງສົມເດັດເຈົ້າຍິງໄອໂກະ ແຫ່ງປະເທດຍີ່ປຸ່ນ ໃນເດືອນພະຈິກທີ່ຜ່ານມາ, ການເດີນທາງໄປຢ້ຽມຢາມປະເທດຍີ່ປຸ່ນຂອງທ່ານປະທານປະເທດ ໃນເດືອນພຶດສະພາ ແລະ ທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໃນເດືອນມັງກອນ 2025 ເຊິ່ງເປັນການປະກອບສ່ວນເຂົ້າໃນການຂະຫຍາຍການຮ່ວມມືແບບຄູ່ຮ່ວມມືຍຸດທະສາດຮອບດ້ານ ລະຫວ່າງ ລາວ-ຍີ່ປຸ່ນ ໃຫ້ເປັນຮູບປະທຳຍິ່ງຂຶ້ນ.

ໃນງານລ້ຽງດັ່ງກ່າວ, ທ່ານທູດ ໂຄອິ ຊຸມິ ໄດ້ຕາງໜ້າໃຫ້ລັດຖະມົນຕີກະຊວງການຕ່າງປະເທດແຫ່ງຍີ່ປຸ່ນ ກ່າວມອບໃບຍ້ອງຍໍກຽດຕິຄຸນໃຫ້ແກ່ຄະນະມິດຕະພາບລັດຖະສະພາລາວ-ຍີ່ປຸ່ນ ທີ່ມີຜົນງານປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ລະຫວ່າງ ຍີ່ປຸ່ນ-ລາວ ຕະຫຼອດໄລຍະຜ່ານມາ; ໃນນາມຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ, ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ກ່າວສະແດງຄວາມປິຕິຊົມຊື່ນເປັນຢ່າງຍິ່ງແລະສະແດງຄວາມຂອບໃຈເປັນຢ່າງສູງ ທີ່ໄດ້ຮັບການຍ້ອງຍໍຈາກລັດຖະມົນຕີກະຊວງການຕ່າງປະເທດແຫ່ງຍີ່ປຸ່ນ ເຊິ່ງເປັນການໃຫ້ກຳລັງໃຈ, ໃຫ້ຄວາມສຳຄັນແກ່ຄະນະມິດຕະພາບລັດຖະສະພາ ລາວ-ຍີ່ປຸ່ນ ໃນນາມເປັນຂົວຕໍ່ມິດຕະພາບລະຫວ່າງປະຊາຊົນສອງຊາດຕະຫຼອດໄລຍະທີ່ຜ່ານມາ ແລະ ໃນນາມຕາງໜ້າໃຫ້ຄະນະມິດຕະພາບ, ທ່ານຍັງໃຫ້ຄຳໝາຍໝັ້ນຈະສືບຕໍ່ເຄື່ອນໄຫວຢ່າງຫ້າວຫັນເພື່ອປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອອັນດີງາມ ລະຫວ່າງ ລາວ-ຍີ່ປຸ່ນ ແລະ ການພົວພັນຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານຂອງສອງອົງການນິຕິບັນຍັດ ກໍຄືສອງປະເທດ ໃຫ້ໄດ້ຮັບການເສີມຂະຫຍາຍຂຶ້ນໄປເລື້ອຍໆ.



# ປະເມີນຜົນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ແລະ ທິດທາງ 5 ປີ ຄັ້ງທີ X



(ສພຊ) - ກອງປະຊຸມສຳມະນາຕິດຕາມກວດກາປະເມີນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ພ້ອມທັງກະກຽມສ້າງແຜນການ 5 ປີ ຄັ້ງທີ X (2026-2030) ໄດ້ຈັດໃນວັນທີ 11-13 ທັນວານີ້ ທີ່ນະຄອນຫຼວງພະບາງ ໂດຍການຜັດປ່ຽນເປັນປະທານຂອງທ່ານ ນາງ ວິໄຊ ສະຣິດທິລາດ ແລະ ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຂອງສະພາແຫ່ງຊາດ (ສພຊ) ເຊິ່ງມີທ່ານ ວິລະພັນ ສີລິທຳ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ທັງເປັນຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ທ່ານ ນາງ ຄາລິງໂກ ການບັດ ຜູ້ອຳນວຍການມູນນິທິອາຊີ ປະຈຳ ສປປລາວ, ບັນດາທ່ານ ສສຊ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ປະທານ ແລະ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນຈາກສະພາປະຊາຊົນຂັ້ນແຂວງ (ສພຂ) 10 ແຂວງພາກເໜືອ ແລະ ພາກກາງ, ວິທະຍາກອນຈາກກົມງົບປະມານແຫ່ງລັດ, ກົມແຜນການ, ສູນສະຖິຕິແຫ່ງຊາດ ກະຊວງການເງິນ, ທະນາຄານແຫ່ງ ສປປລາວ, ສະຖາບັນວິທະຍາສາດເສດຖະກິດ-ສັງຄົມແຫ່ງຊາດ, ມະຫາວິທະຍາໄລແຫ່ງຊາດ, ອົງການສະຫະປະຊາຊາດເພື່ອການພັດທະນາ ພ້ອມດ້ວຍຫົວໜ້າແລະຮອງຫົວໜ້າກົມ, ວິຊາການຈາກ ສພຊ, ສພຂ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ວິໄຊ ສະຣິດທິລາດ ໄດ້ກ່າວເນັ້ນເຖິງຄວາມສຳຄັນຂອງກອງປະຊຸມຄັ້ງນີ້ວ່າ: ການເຂົ້າຮ່ວມຂອງບັນດາທ່ານແມ່ນການປະກອບສ່ວນທີ່ສຳຄັນເຂົ້າໃນການຈັດຕັ້ງພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນການປະເມີນຜົນທ້າຍສະໄໝການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

ກອງປະຊຸມຄັ້ງນີ້ ມີຈຸດປະສົງຕົ້ນຕໍເພື່ອເພີ່ມທະວີ ແລະ ຍົກສູງຄວາມຮູ້ຄວາມສາມາດທາງດ້ານວິຊາສະເພາະໃຫ້ແກ່ວິຊາການທີ່ເປັນເສນາທິການຊ່ວຍວຽກຂອງກຳມາທິການ ແລະ ສະພາປະຊາຊົນຂັ້ນແຂວງ ໃນວຽກງານການສ້າງແຜນ, ການພິຈາລະນາຮັບຮອງມະຕິ ແລະ ການຕິດຕາມກວດກາ, ປະເມີນຜົນ, ສະຫຼຸບຕີລາຄາ ຜົນສຳເລັດ, ບັນຫາຄົງຄ້າງ ແລະ ສິ່ງທ້າທາຍຂອງແຜນການ 5 ປີ ຄັ້ງທີ IX, ກະກຽມຄວາມພ້ອມທາງດ້ານເນື້ອໃນສຳລັບການສະຫຼຸບຕີລາຄາ ແລະ ການວາງທິດທາງສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ເພື່ອຮັບໃຊ້ກອງປະຊຸມສະພາແຫ່ງຊາດຄັ້ງຕໍ່ໄປ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການບັນລະຍາຍຈາກວິທະຍາກອນຜູ້ຊ່ຽວຊານຈາກ 7 ພາກສ່ວນຄື: ກຳມາທິການແຜນການ, ການເງິນ ແລະ ການກວດສອບຂອງສະພາແຫ່ງຊາດ, ກົມແຜນການ, ກົມງົບປະມານ, ສູນສະຖິຕິແຫ່ງຊາດ ຂອງກະຊວງການເງິນ, ທະນາຄານແຫ່ງສປປລາວ, ສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ມະຫາວິທະຍາໄລແຫ່ງຊາດ ແລະ ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປລາວ ກ່ຽວກັບຫຼັກການ, ກົນໄກ ແລະ ວິທີການປະເມີນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງແຜນການ 5 ປີ ຄັ້ງທີ IX (2026-2030) ເພື່ອກະກຽມນຳໄປພິຈາລະນາຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດໃນຕໍ່ໜ້າ; ນອກຈາກນັ້ນ, ຍັງໄດ້ໄປເຄື່ອນໄຫວການທັດສະນະສຶກສາຕົວຈິງ ໂດຍແບ່ງອອກເປັນ 4 ກຸ່ມ ເພື່ອເກັບກຳຂໍ້ມູນພຶດຕິກຳບົດຮຽນຕົວຈິງການພັດທະນາເສດຖະກິດ-ສັງຄົມຂອງແຂວງຫຼວງພະບາງ ແລ້ວນຳມາລາຍງານຜົນການທັດສະນະສຶກສາ ແລະ ສົນທະນາແລກປ່ຽນບົດຮຽນກັບວິທະຍາກອນ ເພື່ອສະຫຼຸບສັງລວມເປັນບົດຮຽນ.

ທ່ານ ທັນຕາ ກອງຜາລີ ໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມ ຈົ່ງເອົາໃຈໃສ່ເກັບກຳບົດຮຽນ, ແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ ແລະ ໝູນໃຊ້ຄວາມຮູ້ທີ່ໄດ້ຮັບ ເພື່ອນຳໄປປະກອບສ່ວນເຂົ້າໃນການຍົກສູງວຽກງານສ້າງແຜນ, ການພິຈາລະນາຮັບຮອງ ແລະ ການຕິດຕາມກວດກາປະເມີນຜົນຂອງອົງການນິຕິບັນຍັດ ໃຫ້ມີຄຸນນະພາບດີຂຶ້ນກວ່າເກົ່າ.



# ກອງປະຊຸມປະຈຳປີ 2025 ຂອງ ສນສ




(ສພຊ) - ກອງປະຊຸມປະຈຳປີ 2025 ຂອງສະຖາບັນຄົ້ນຄວ້ານິຕິກຳສະພາແແຫ່ງຊາດ (ສນສ) ໄດ້ດຳເນີນໃນວັນທີ 17-18 ທັນວານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ດຣ. ວິລະພັນສີລິທຳຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ໂດຍການເຂົ້າຮ່ວມຂອງບັນດາທ່ານຮອງປະທານກຳມາທິການ, ຮອງເລຂາທິການ, ຫົວໜ້າ ແລະ ຮອງຫົວໜ້າກົມ, ສູນແລະຫ້ອງການທີ່ກ່ຽວຂອງພາຍໃນສະພາແຫ່ງຊາດ ພ້ອມດ້ວຍແຂກຖືກເຊີນ.

ຕະຫຼອດວາລະດຳເນີນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຂອງສະຖາບັນຄົ້ນຄວ້ານິຕິກຳ ໃນໄລຍະ 5 ປີ (2021-2025)ແລະທິດທາງແຜນການປີ 2026, ບົດຮຽນ ແລະ ພຶດຕິກຳຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະປາຊົນຂັ້ນແຂວງ, ການຄຸ້ມຄອງ ແລະ ນຳໃຊ້ເຄືອຂ່າຍພາຍໃນສະພາແຫ່ງຊາດ, ການສະໜອງຂໍ້ມູນເຂົ້າຖານຂໍ້ມູນໃຫ້ແກ່ສະມາຊິກສະພາແຫ່ງຊາດໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ, ການຄົ້ນຄວ້າ ແລະ ສະໜອງຂໍ້ມູນຂ່າວສານຜ່ານລະບົບເອເລັກໂຕຣນິກ ໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ ໃຫ້ແກ່ສະມາຊິກສະພາແຫ່ງຊາດ; ຈາກນັ້ນ, ໄດ້ມີການແລກປ່ຽນບົດຮຽນ, ປະກອບຄຳຄິດຄຳຄວາມເຫັນຢ່າງສ້າງສັນ ແລະ ກົງໄປກົງມາ ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມແຜນການທີ່ວາງໄວ້.

ທ່ານ ດຣ. ວິລະພັນ ສີລິທຳ ກ່າວວ່າ: ກອງປະຊຸມຄັ້ງນີ້ເປັນການສະຫຼຸບຖອດຖອນບົດຮຽນ, ຕີລາຄາຄືນການເຄື່ອນໄຫວປະຕິບັດພາລະບົດບາດຂອງສະຖາບັນຄົ້ນຄວ້ານິຕິກຳ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ. ຕະຫຼອດໄລຍະ 5 ປີ ໄດ້ເອົາໃຈໃສ່ປະຕິບັດຫຼາຍໜ້າທີ່ວຽກງານປະສົບຜົນສຳເລັດເປັນຕົ້ນການຈັດເຝິກອົບຮົມ, ການຄົ້ນຄວ້າຫົວຂໍ້ວິທະຍາສາດ, ການສະໜອງຂໍ້ມູນຂ່າວສານ ແລະ ການບໍລິການຫ້ອງສະໝຸດຂອງສະພາແຫ່ງຊາດ; ພ້ອມດຽວກັນນີ້, ກໍໄດ້ວາງທິດທາງແຜນການປີ2026 ເຖິງແມ່ນວ່າກົງຈັກການຈັດຕັ້ງສະຖາບັນຄົ້ນຄວ້ານິຕິກຳຈະຖືກຍຸບ ແລ້ວໂຮມເຂົ້າກັບກົງຈັກການຈັດຕັ້ງອື່ນຢູ່ພາຍໃນສະພາແຫ່ງຊາດກໍຕາມແຕ່ບັນດາກຸ່ມວຽກ, ໜ້າວຽກແມ່ນຍັງມີຄືເກົ່າ.

**(ນາງ ອານິຕາ ມ່ວນສະຫວັດ)**





## ວາງກະຕ່າ...

(ຕໍ່ຈາກໜ້າ 1)

ທັນວາ 1920-13 ທັນວາ 2025) ເພື່ອສະແດງຄວາມເຄົາລົບຮັກ, ຄວາມກະຕັນຍູຮູ້ບຸນຄຸນ ເຖິງຄຸນງາມຄວາມດີຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນບັນດາເຜົ່າ ທີ່ໄດ້ອຸທິດຕະຫຼອດຊີວິດເພື່ອຜົນປະໂຫຍດລວມຂອງຊາດ ເພື່ອອະນາຄົດຂອງລູກຫຼານບັນດາເຜົ່າ; ປະທານ ໄກສອນ ພົມວິຫານ ໄດ້ສຸມສະຕິປັນຍາເຂົ້າໃນການນຳພາຂະບວນການຕໍ່ສູ້ຕ້ານການຮຸກຮານຂອງພວກຕ່າງດ້າວສາມາດຍາດໄດ້ໄຊຊະນະ ແລະ ນຳເອົາຄວາມຢູ່ເຢັນເປັນສຸກມາສູ່ປະຊາຊົນ; ເພິ່ນແມ່ນນັກຮັກຊາດຜູ້ຍິ່ງໃຫຍ່, ແມ່ນລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ, ແມ່ນນັກປະຕິວັດຜູ້ດີເລີດ; ເພິ່ນເປັນຜູ້ນຳສູງສຸດຂອງການປະຕິວັດທີ່ມີຄວາມປີຊາສາມາດ, ມີຄວາມສະຫຼາດຫຼັກແຫຼມ, ມີໄຫວພິບອັນແຫຼມຄົມ, ມີນ້ຳໃຈຕໍ່ສູ້ເດັດດ່ຽວໜຽວແໜ້ນ, ນຳພາສ້າງຕັ້ງ, ຖະນຸບຳລຸງ, ສ້າງສາ ແລະ ພັດທະນາປະເທດຊາດໃຫ້ຮຸ່ງເຮືອງສີວິໄລ, ສ້າງປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມຢ່າງໝັກແໜ້ນ.

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)

**ການປະຕິບັດພາລະບົດບາດດ້ານນິຕິບັນຍັດ:**

ປີ 2022 ສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນດາກົດໝາຍທັງໝົດຈຳນວນ 21 ສະບັບ, ໃນນີ້:

+ ກົດໝາຍສ້າງໃໝ່ 6 ສະບັບ ຄື: (1) ກົດໝາຍວ່າດ້ວຍ ການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ, (2) ກົດໝາຍວ່າດ້ວຍ ຄວາມປອດໄພຂອງເຂື່ອນ, (3) ກົດໝາຍວ່າດ້ວຍວິຈິດສິນ, (4)ກົດໝາຍວ່າດ້ວຍການທາງນ້ຳ, (5) ກົດໝາຍວ່າດ້ວຍ ໜັງສືຜ່ານແດນ, (6) ກົດໝາຍວ່າດ້ວຍ ພິພິທະພັນ.

+ ກົດໝາຍປັບປຸງ 15 ສະບັບ ຄື: (1) ກົດໝາຍວ່າດ້ວຍ ຊັບສິນຂອງລັດ, (2) ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, (3) ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ, (4) ກົດໝາຍວ່າດ້ວຍ ການສົ່ງເສີມວິສາຫະກິດຂະໜາດນ້ອຍແລະກາງ, ວິສາຫະກິດຂະໜາດນ້ອຍແລະກາງ, (5) ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍ ສານປະຊາຊົນ, (6) ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, (7) ກົດໝາຍວ່າດ້ວຍ ທະບຽນສານ, (ກົດໝາຍວ່າດ້ວຍທະນາຍຄວາມ, (9) ກົດໝາຍວ່າດ້ວຍ ວິສາຫະກິດ, (10) ກົດໝາຍວ່າດ້ວຍວິທະຍາສາດແລະເຕັກໂນໂລຊີ, (11) ກົດໝາຍວ່າດ້ວຍ ທຸລະກຳທາງເອເລັກໂຕຣນິກ, (12) ກົດໝາຍວ່າດ້ວຍ ການກັນ ແລະ ຄວບຄຸມພະຍາດຕິດຕໍ່, (13) ກົດໝາຍວ່າດ້ວຍ ອົງການໄອຍະການທະຫານ, (14) ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, (15) ກົດໝາຍວ່າດ້ວຍການກວດກາລັດ.

ສະພາແຫ່ງຊາດ ໄດ້ຈັດຕັ້ງປະຕິບັດປະເມີນກົດໝາຍ 4 ສະບັບທີ່ຕິດພັນກັບວາລະແຫ່ງຊາດ ຄື: 1. ກົດໝາຍວ່າດ້ວຍທີ່ດິນ, 2. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ,3.ກົດໝາຍວ່າດ້ວຍ ຊັບສິນຂອງລັດ, 4. ກົດໝາຍວ່າດ້ວຍ ແຮ່ທາດ ຢູ່ເປົ້າໝາຍຕ່າງໆ ທັງສູນກາງ ແລະທ້ອງຖິ່ນເຊິ່ງມີຜູ້ເຂົ້າຮ່ວມ 850 ເທື່ອຄົນ, ຍິງ 45 ເທື່ອຄົນ. ນອກນັ້ນ, ຍັງໄດ້ດຳເນີນກອງປະຊຸມສຳມະນາວິທະຍາສາດ ແນວຄວາມຄິດ ໄກສອນ ພົມວິຫານ ແລະ ກອງປະຊຸມສຳມະນາວິທະຍາສາດ ກ່ຽວກັບການຄົ້ນຄວ້າຍົກເວັ້ນບາງມາດຕາຂອງກົດໝາຍ ຢູ່ສູນກາງແລະທ້ອງຖິ່ນ ເຊິ່ງມີຜູ້ເຂົ້າຮ່ວມ 122 ທ່ານ, ຍິງ 25 ທ່ານ; ໃຫ້ສັດຕະຍາບັນແກ່ສົນທິສັນຍາແລະສັນຍາສາກົນ ທີ່ ສປປລາວ ເປັນພາຄີ 2 ສະບັບ ຄື: ສົນທິສັນຍາແຮງງານສາກົນ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ສົນທິສັນຍາວ່າດ້ວຍ ຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ. ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝວິສາມັນເທື່ອທີ 1 ແລະ ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດໄດ້ທັງໝົດ 1,239 ຈຸດ, ມີຜູ້ເຂົ້າຮ່ວມ 114,204 ເທື່ອຄົນ, ຍິງ 47,260 ເທື່ອຄົນ. ນອກນັ້ນ, ຍັງໄດ້ລະດົມທຶນຊ່ວຍເຫຼືອປະຊາຊົນ ລວມມູນຄ່າທັງໝົດ 1,374,240,756 ກີບ.



ການປະຕິບັດພາລະບົດບາດ ດ້ານນິຕິບັນຍັດ

**ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:**

ປີ 2022 ສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດຕາມລັດຖະທຳມະນູນ ແລະ ກົດໝາຍໂດຍຜ່ານການດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

-ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ໄດ້ພິຈາລະນາ, ຮັບຮອງເອົາບັນດາຫົວຂໍ້ທັງໝົດຈຳນວນ 23 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 21 ສະບັບ;

-ຄະນະປະຈຳສະພາແຫ່ງຊາດ ໄດ້ປະຕິບັດພາລະບົດບາດແທນສະພາແຫ່ງຊາດ ໃນເວລາບໍ່ໄດ້ເປີດກອງປະຊຸມສະພາແຫ່ງຊາດ ດ້ວຍການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມສະໄໝສາມັນແລະກອງປະຊຸມສະໄໝວິສາມັນ ຂອງຄະນະປະຈຳສະພາແຫ່ງຊາດ ຈຳນວນ 9 ຄັ້ງ ເຊິ່ງໄດ້ພິຈາລະນາຫົວຂໍ້ສຳຄັນຕ່າງໆ ທັງໝົດ 133 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ 62 ສະບັບ. ໃນນີ້, ພົວພັນກັບວຽກງານລັດຖະບານ ແລະ ບຸກຄະລາກອນຂອງລັດຖະບານ ລວມ 13 ສະບັບ; ວຽກງານສານປະຊາຊົນສູງສຸດ 42 ສະບັບ; ວຽກງານອົງການກວດສອບແຫ່ງລັດ 1 ສະບັບ; ວຽກງານສະພາແຫ່ງຊາດ, ບຸກຄະລາກອນຂອງສະພາແຫ່ງຊາດ ແລະ ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ລວມ 6 ສະບັບ.

**ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ:**

ປີ 2022 ສະພາແຫ່ງຊາດ ໄດ້ປະຕິບັດພາລະບົດບາດຕິດຕາມກວດກາ ຜ່ານກົນໄກການດຳເນີນກອງປະຊຸມຮ່ວມກັບຄະນະລັດຖະບານ ໃນການຄົ້ນຄວ້າແກ້ໄຂບັນຫາຮີບດ່ວນຂອງສັງຄົມ ເຊິ່ງໄດ້ພິຈາລະນາເນື້ອໃນ ຈຳນວນ 10 ຫົວຂໍ້ ເປັນຕົ້ນ ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ໂຄງການທົດລອງຂຸດຄົ້ນແຮ່ທາດ; ການຍົກເວັ້ນບາງມາດຕາຂອງກົດໝາຍ, ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ, ການປະຕິຮູບບັນດາລັດວິສາຫະກິດ ແລະ ທະນາຄານທຸລະກິດລັດ; ການເໜັງຕີງຂອງອັດຕາແລກປ່ຽນ; ການເພີ່ມຂຶ້ນຂອງລາຄານ້ຳມັນ; ການແຜ່ລະບາດຂອງພະຍາດໂຄວິດ-19 ໃນຮອບໃໝ່; ແຜນການທ່ອງທ່ຽວສີຂຽວ, ກົນໄກການເຮັດວຽກ ລະຫວ່າງ ສະພາແຫ່ງຊາດ ກັບ ລັດຖະບານ.



ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ

ຄະນະປະຈຳສະພາແຫ່ງຊາດ ໄດ້ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນວຽກງານທີ່ພົ້ນເດັ່ນຢູ່ສູນກາງ ແລະ ທ້ອງຖິ່ນ ເປັນຕົ້ນ ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ການຜັນຂະຫຍາຍເນື້ອໃນກົດໝາຍທີ່ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ, ການລົງທຶນຂອງລັດໃນເຂດເສດຖະກິດພິເສດ ແລະ ເຂດທ່າບົກໂລຊິສຕິກ. ນອກນັ້ນ, ສະພາແຫ່ງຊາດ ໄດ້ຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງທັງໝົດ 695 ເລື່ອງ ແລະ ສາມາດພິຈາລະນາແກ້ໄຂໄດ້ຈຳນວນ 113 ເລື່ອງ; ຕ້ອນຮັບ ແລະໃຫ້ຄຳປຶກສາແກ່ປະຊາຊົນ ຈຳນວນ 132 ຄັ້ງ, ສັງລວມວຽກງານສາຍດ່ວນກອງປະຊຸມສະພາແຫ່ງຊາດ ໄດ້ຈຳນວນ 232 ຫົວຂໍ້ ແລະ ສົ່ງໃຫ້ກະຊວງ-ອົງການ, ຂະແໜງການ ແລະ ພາກສ່ວນກ່ຽວຂ້ອງ ຈຳນວນ 25 ພາກສ່ວນ ເພື່ອຄົ້ນຄວ້າແກ້ໄຂ ເຊິ່ງໄດ້ຮັບການແຈ້ງຕອບຄືນ 3 ພາກສ່ວນ ຄື: ອົງການກວດກາແຫ່ງລັດ, ສະພາປະຊາຊົນແຂວງບໍ່ແກ້ວ ແລະ ສະພາປະຊາຊົນແຂວງໄຊຍະບູລີ.

**ການເຄື່ອນໄຫວວຽກງານການຕ່າງປະເທດ:**

ປີ 2022 ສະພາແຫ່ງຊາດ ໄດ້ເຄື່ອນໄຫວວຽກງານການຕ່າງປະເທດ ທັງໝົດ 29 ຄັ້ງ. ໃນນີ້, ພົບປະແລກປ່ຽນບົດຮຽນກັບບັນດາປະເທດເພື່ອນມິດຍຸດທະສາດຜ່ານກອງປະຊຸມທາງໄກ 4 ຄັ້ງ, ເຂົ້າຮ່ວມກອງປະຊຸມພາກພື້ນ ແລະ ສາກົນດ້ວຍຮູບແບບຕ່າງໆ 12 ຄັ້ງ, ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ແລະເຂົ້າອວຍພອນຂອງບັນດາຄະນະຜູ້ແທນຈາກຕ່າງປະເທດ ລວມທັງທູຕານຸທູດ ແລະ ອົງການຈັດຕັ້ງສາກົນ ປະຈຳຢູ່ ສປປລາວ 13 ຄັ້ງ; ອັນພິເສດ, ຄະນະຜູ້ແທນຂັ້ນສູງ ນຳໂດຍທ່ານປະທານສະພາແຫ່ງຊາດແຫ່ງ ສປປລາວ ໄດ້ເດີນທາງຢ້ຽມຢາມ ສສ.ຫວຽດນາມ ຢ່າງເປັນທາງການ ທັງໄດ້ຕ້ອນຮັບຄະນະຜູ້ແທນຂັ້ນສູງ ນຳໂດຍທ່ານປະທານສະພາແຫ່ງຊາດ ສສ.ຫວຽດນາມ ເຊິ່ງສອງຝ່າຍໄດ້ເຊັນບົດບັນທຶກຮ່ວມມືກັນໄລຍະ 5 ປີຕໍ່ໜ້າ ເພື່ອເສີມຂະຫຍາຍສາຍພົວພັນໃຫ້ນັບມື້ໜັ້ນຄົງຂະນົງແກ່ນຕະຫຼອດໄປ.



ການປະຕິບັດພາລະບົດບາດ ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

# ສພຂ ວຽງຈັນ ພິຈາລະນາຮັບຮອງເອົາ ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ




(ສພຂ) - ວັນທີ 27 ພະຈິກຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ວຽງຈັນ ໄດ້ມີກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງວຽງຈັນ ຊຸດທີ IV ເປີດກວ້າງເພື່ອຮັບຮອງເອົາກົງຈັກການຈັດຕັ້ງ ຂອງຄະນະກຳມະການການປົກຄອງແຂວງວຽງຈັນ ໂດຍການເປັນປະທານຂອງທ່ານບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ(ສສຊ) ປະຈຳເຂດເລືອກຕັ້ງທີ10ແຂວງວຽງຈັນ ແລະ ພະແນກການກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດ-ຄຳເຫັນ ແລະ ຮັບຮອງເອົາກົງຈັກການຈັດຕັ້ງ ຂອງຄະນະກຳມະການການປົກຄອງແຂວງວຽງຈັນ ຄື: 1) ຫ້ອງວ່າການແຂວງວຽງຈັນ; 2) ກອງບັນຊາການທະຫານແຂວງວຽງຈັນ; 3) ກອງບັນຊາການປ້ອງກັນຄວາມສະຫງົບແຂວງວຽງຈັນ; 4) ພະແນກການຕ່າງປະເທດແຂວງວຽງຈັນ; 5) ພະແນກຍຸຕິທຳແຂວງວຽງຈັນ;6)ພະແນກສຶກສາທິການແລະກິລາແຂວງວຽງຈັນ; 7) ພະແນກວັດທະນະທຳ ແລະ ທ່ອງທ່ຽວແຂວງວຽງຈັນ; 8) ພະແນກສາທາລະນະສຸກແຂວງວຽງຈັນ; 9) ພະແນກການເງິນແຂວງວຽງຈັນ; 10) ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງວຽງຈັນ; 11) ພະແນກອຸດສະຫະກຳ ແລະ ການຄ້າແຂວງວຽງຈັນ;12)ພະແນກໂຍທາທິການແລະຂົນສົ່ງແຂວງວຽງຈັນ;13)ພະແນກແຮງງານ ແລະ ສະຫວັດດີການ-ສັງຄົມແຂວງວຽງຈັນ ;14) ພະແນກເຕັກໂນໂລຊີ ແລະ ການສື່ສານແຂວງວຽງຈັນ ແລະ 15) ຫ້ອງການຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນແຂວງວຽງຈັນ.

ພ້ອມນີ້, ຍັງໄດ້ພິຈາລະນາຮັບຮອງເອົາບຸກຄະລະກອນ ຂອງຄະນະກຳມະການການປົກຄອງແຂວງວຽງຈັນ ຄື: 1. ທ່ານ ພູວົງ ບຸນຊູ ຮອງເລຂາພັກແຂວງ ເປັນປະທານຄະນະກຳມະການປົກຄອງແຂວງວຽງຈັນ;2. ທ່ານ ສົມປະສົງ ສຸວົງຄຳຈັນ ກຳມະການປະຈຳພັກແຂວງ ເປັນຮອງປະທານຄະນະກຳມະການປົກຄອງແຂວງວຽງຈັນ; 3. ທ່ານ ປອ. ສີວຽງໄຊ ອໍລະບູນ ກຳມະການປະຈຳພັກແຂວງ ເປັນຮອງປະທານຄະນະກຳມະການປົກຄອງແຂວງວຽງຈັນ; 4. ທ່ານ ພົມມະລາ ນັນທະວົງ ກຳມະການພັກແຂວງ ເປັນຫົວໜ້າຫ້ອງວ່າການແຂວງວຽງຈັນ;5. ທ່ານ ພົອ. ສຸດໃຈ ມະຫາວົງ ກຳມະການພັກແຂວງເປັນຫົວໜ້າການເມືອງ,ກອງບັນຊາການທະຫານແຂວງວຽງຈັນ; 6. ທ່ານ ພັອ. ສຸດທາ ສີສະຫຼາດ ກຳມະການພັກແຂວງ ເປັນຫົວໜ້າການທະຫານ, ກອງບັນຊາການທະຫານແຂວງວຽງຈັນ.

ນອກນີ້, ຍັງໄດ້ພິຈາລະນາອະນຸມັດໃຫ້ພະນັກງານການນຳຂັ້ນສູງ ອອກພັກການ-ຮັບອຸດໜູນບຳນານຄື: ທ່ານຄຳພັນ ສິດທິດຳພາກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງແຂວງວຽງຈັນ ແລະ ທ່ານ ດາວເຮືອງ ນັນທະວົງ ກຳມະການປະຈຳພັກແຂວງ, ຮອງເຈົ້າແຂວງວຽງຈັນ ອອກພັກການ-ຮັບອຸດໜູນບຳນານ ຕາມລະບຽບການອີກດ້ວຍ.

**(ບຸລາຕີ ແສນທະວົງ)**

# ກອງປະຊຸມຄົບຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ປະຈຳປີ 2025




(ສພຂ) - ວັນທີ 24 ພະຈິກຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ໄດ້ຈັດກອງປະຊຸມຄົບຄະນະປະຈຳປີ 2025 ໂດຍການເປັນປະທານກອງປະຊຸມຂອງທ່ານ ຄຳສຸກ ວັນທະວົງສາ ປະທານຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປກຊ-ປກສ; ເຂົ້າຮ່ວມມີ ທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ, ຜູ້ຊີ້ນຳວຽກງານຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ສັງກັດຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ມີບັນດາຄະນະກອງບັນຊາການທະຫານແຂວງ, ປກສແຂວງ, ອົງການກວດກາລັດແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ພາກສ່ວນກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຈາກທ່ານ ພັທ. ຈັນເພັງ ແກ້ວມະນີ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຈາກນັ້ນ; ໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ2024ແລະທິດທາງແຜນການ ປະຈຳປີ 2025 ຂອງກຳມະການຍຸຕິທຳແລະປກຊ-ປກສ ເພື່ອຄົ້ນຄວ້າ, ປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ໂດຍສົມທຽບໃສ່ພຶດຕິກຳຕົວຈິງຢູ່ທ້ອງຖິ່ນ ແລະ ຂະແໜງການຂອງຕົນ ເພື່ອເປັນພື້ນຖານໃຫ້ຄະນະກຳມາການນຳໄປຄົ້ນຄວ້າ, ປຶກສາຫາລື ແລະປັບປຸງໃຫ້ມີເນື້ອໃນທີ່ຄົບຖ້ວນ, ຖືກຕ້ອງ, ສອດຄ່ອງ ແລະ ສົມບູນ ສາມາດຮັບຮອງເອົາ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ.

ທ່ານ ບົວພັນ ແສງຈັນ ກ່າວວ່າ: ກອງປະຊຸມຄັ້ງນີ້ ມີຄວາມໝາຍຄວາມສຳຄັນຢ່າງຍິ່ງ ເຊິ່ງແມ່ນບັ້ນກວດກາ-ຕີລາຄາຄືນໃນການຈັດຕັ້ງປະຕິບັດ ພາລະບົດບາດຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໃນການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ, ການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ-ກົດໝາຍ ກໍຄືຄຳຮ້ອງ-ຄຳສະເໜີຂໍຄວາມເປັນທຳ ຂອງພະນັກງານ, ທະຫານ,ຕຳຫຼວດ ຕະຫລອດຮອດປະຊາຊົນບັນດາເຜົ່າໃນທົ່ວແຂວງຄຳມ່ວນ ຕິດພັນກັບການພົວພັນປະສານງານອຳນວຍຄວາມສະດວກເຊິ່ງກັນ ແລະ ກັນ ລະຫວ່າງ ສພຂ ກັບກອງກຳລັງ, ອົງການ, ພະແນກການທີ່ກ່ຽວຂ້ອງ ເພື່ອນຳເອົາຄວາມຍຸຕິທຳມາໃຫ້ສັງຄົມ ທັງສະຫລຸບຕີລາຄາບັນດາໝາກຜົນ, ບົດຮຽນໃນການຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມສະໄໝສາມັນຂອງ ສພຂ ຄຳມ່ວນ ຊຸດທີ IV ເພື່ອບັນລຸເປົ້າໝາຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ມີຄວາມໂປ່ງໃສ, ເປັນທຳ ແລະ ຖືກຕ້ອງຕາມກົດໝາຍ ແລະ ເຮັດໃຫ້ວຽກງານຕິດຕາມກວດກາແລະແກ້ໄຂຄຳຮ້ອງຂໍຄວາມເປັນທຳມີປະສິດທິພາບຍິ່ງຂຶ້ນ.

# ມອບ-ຮັບ ສະໂຕໂລນ້ຳ ໃຫ້ໂຮງຮຽນ ກໍ່ສ້າງນາຍສິບເລກ 2 ວຽງໄຊ



(ສພຂ) - ວັນທີ 28 ພະຈິກຜ່ານມາ, ທ່ານ ສີເຮັງ ຫອມສົມບັດປະທານສະພາປະຊາຊົນແຂວງສາລະວັນ ໄດ້ມອບສະໂຕໂລນ້ຳ ມູນຄ່າການກໍ່ສ້າງ 23 ລ້ານກວ່າກີບ ແກ່ໂຮງຮຽນກໍ່ສ້າງນາຍສິບທະຫານຮາບເລກ 2 ວຽງໄຊ ເມືອງບາຈຽງຈະເລີນສຸກ ແຂວງຈຳປາສັກ; ຕາງໜ້າຮັບໂດຍ ທ່ານ ພັອ. ສຳລີ ຈັນທະວົງ ຫົວໜ້າອຳນວຍການໂຮງຮຽນກໍ່ສ້າງນາຍສິບທະຫານຮາບເລກ 2 ວຽງໄຊ ພ້ອມດ້ວຍນາຍ ແລະ ພົນທະຫານເຂົ້າຮ່ວມເປັນສັກຂີພະຍານ.

ທັງນີ້, ເພື່ອປະກອບສ່ວນອັນສຳຄັນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ທັງປັບປຸງກໍ່ສ້າງກອງທັບໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງ ເວົ້າລວມ, ເວົ້າສະເພາະ ປະກອບສ່ວນເຂົ້າໃນການປັບປຸງກໍ່ສ້າງອະນຸສອນສະຖານປະທານ ໄກສອນ ພົມວິຫານ ຂອງໂຮງຮຽນວຽງໄຊ ໃຫ້ມີໃບໜ້າໃໝ່ ແລະ ນຳໃຊ້ເຂົ້າໃນການບົວລະບັດຮັກສາສວນອະນຸສອນສະຖານໃຫ້ມີຄວາມສະອາດສວຍງາມ ແລະ ເປັນແວ່ນແຍງໃຫ້ແກ່ຮຸ່ນສືບທອດເຂົ້າໃນການສຶກສາຄົ້ນຄວ້າຮ່ຳຮຽນເພື່ອເຝິກຝົນຫຼໍ່ຫຼອມຕົນເອງ ໃຫ້ກາຍເປັນຜູ້ສືບທອດພາລະກິດຂອງຊາດ.

**(ວິລະກອນ-ຈັນທີ)**



## ສູນທອນພົດ...

(ຕໍ່ຈາກໜ້າ 1)

ຮອບດ້ານ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

ມື້ນີ້, ພວກເຮົາມາເຕົ້າໂຮມກັນຢູ່ທີ່ນີ້ ເພື່ອສະເຫຼີມສະຫຼອງວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ (13 ທັນວາ 1920-13ທັນວາ2025)ເພື່ອສະແດງຄວາມອາໄລຮັກ, ຄວາມກະຕັນຍູຮູ້ບຸນຄຸນຢ່າງສຸດຊຶ້ງ ຕໍ່ຜົນງານ ແລະ ຄຸນງາມຄວາມດີອັນໃຫຍ່ຫຼວງຂອງປະທານ ໄກສອນ ພົມວິຫານ ຜູ້ນຳພາກໍ່ຕັ້ງ, ທະນຸບຳລຸງພັກປະຊາຊົນປະຕິວັດລາວ, ເປັນຜູ້ນຳພາສ້າງຕັ້ງກຳລັງປະກອບອາວຸດປະຕິວັດຂອງປະຊາຊົນ, ນຳພາຂະບວນການຕໍ່ສູ້ກູ້ຊາດ, ນຳເອົາເອກະລາດ, ອິດສະຫຼະພາບ ມາສູ່ປະເທດຊາດ ກ້າວເຖິງການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ ເພື່ອສືບຕໍ່ກ້າວຂຶ້ນຕາມເສັ້ນທາງສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນະຖາວອນ.

ບັນດາສະຫາຍ, ເພື່ອນມິດ ທີ່ຮັກແພງ,

ໃນໂອກາດນີ້,ພວກເຮົາອາດຈະທົບທວນຄືນປະຫວັດຄວາມເປັນມາຂອງຊາດເຮົາໂດຍສັງເຂບທີ່ສຸດ, ໂດຍສະເພາະປະຫວັດຄວາມເປັນມາຂອງບັນດາບັນພະບຸລຸດຂອງຊາດລາວ ທີ່ຕິດພັນກັບປະຫວັດສາດຂອງຊາດເຮົານັ້ນ, ອາດຈະເວົ້າໄດ້ວ່າ ໃນແຕ່ລະຍຸກ, ແຕ່ລະສະໄໝຂອງແຕ່ລະໄລຍະປະຫວັດສາດ ກໍມີບັນພະບຸລຸດທີ່ມີນ້ຳໃຈຮັກຊາດ, ມີຄວາມປາຖະໜາທີ່ແຮງກ້າຢາກໃຫ້ຊາດມີເອກະລາດ, ມີຜືນແຜ່ນດິນອັນຄົບຖ້ວນເປັນຂອງຄົນລາວ ແລະ ບັນພະບຸລຸດເຫຼົ່ານັ້ນ ກໍມີຄວາມພະຍາຍາມດີ້ນຮົນເພື່ອສ້າງຄວາມເປັນເອກະພາບ, ຄວາມປອງດອງ ແລະ ເຕົ້າໂຮມຄວາມເປັນປຶກແຜ່ນພາຍໃນຊາດ ເພື່ອມີກຳລັງແຮງແຫ່ງການປົກປ້ອງຊາດ ແລະ ຜືນແຜ່ນດິນຂອງຕົນ ບໍ່ໃຫ້ຖືກຮຸກຮານ, ຖືກກືນກິນ ແລະ ຖືກຢຽບຢ່ຳທຳລາຍ, ປົກປ້ອງປະຊາລາສະດອນ ບໍ່ໃຫ້ຖືກກົດຂີ່ຂົ່ມເຫັງ,ຕົກເປັນທາດຂອງຊາດອື່ນຢ່າງທຸກທໍລະມານແລະອື່ນໆ... ແຕ່ຄວາມພະຍະຍາມເຫຼົ່ານັ້ນກໍມັກຈະຖືກທຳລາຍລົງເປັນຄັ້ງໆ; ຄວາມເປັນຊາດ ເອກະພາບ ກໍມັກຖືກມ້າງເພໃຫ້ແຕກແຍກ, ຊາດກໍຖືກກັບມາຊ້ຳຮອຍ;ຄວາມເຈັບປວດຂອງປະເທດຊາດ ແລະ ປະຊາຊົນ ກໍຍິ່ງນັບມື້ນັບໜັກໜ່ວງ ບໍ່ມີຍາມເຊົາຫືວເຊົາຍຄໍຂຶ້ນໄດ້...ແຕ່ຄົນລາວທີ່ເກີດມາໃນຍຸກໃໝ່, ໃນສະຕະວັດໃໝ່ (ສະຕະວັດທີ 20) ມານີ້, ຄົນລາວເລີ່ມເຫັນແສງສະຫວ່າງຢູ່ໃນຮູຖ້ຳທີ່ມືດມົນ, ແສງດັ່ງກ່າວໄດ້ເກີດຂຶ້ນ ແລະ ໄດ້ເປັ່ງລັດສະໝີອອກມາເທື່ອລະນ້ອຍ ຈົນເປັ່ງປະກາຍອອກເປັນແປວໄຟທີ່ກະຈາຍໄປທົ່ວປະເທດ ແລະ ກາຍເປັນທອນໄຟປະຕິວັດທີ່ມີກຳລັງແຮງ ທີ່ມີຄວາມສັກສິດ... ແສງສະຫວ່າງນັ້ນ ໄດ້ແກ່ແສງສະຫວ່າງຂອງລັດທິມາກສ໌-ເລນິນ, ແສງສະຫວ່າງຂອງແນວທາງການປະຕິວັດປົດປ່ອຍຊາດຂອງພັກກອມມູນິດອິນດູຈີນ, ແສງສະຫວ່າງ ແລະ ທອນໄຟຂອງພັກປະຊາຊົນລາວ ທີ່ໄດ້ສ້າງຕັ້ງຂຶ້ນໃນປີ1955,ເຊິ່ງວິລະບຸລຸດທີ່ມີຊື່ວ່າ ໄກສອນ ພົມວິຫານ ເປັນຜູ້ກໍ່ຕັ້ງ, ເປັນຜູ້ຊີ້ນຳທະນຸບຳລຸງສ້າງ ແລະ ເປັນຜູ້ສ້າງໃຫ້ພັກນີ້ ນຳພາປະຊາຊົນລຸກຂຶ້ນຕໍ່ສູ້ຢ່າງພິລະອົງອາດ, ລະອິດລະອ້ຽວ ແລະຍືດເຍື້ອຍາວນານ ຈົນຍາດໄດ້ໄຊຊະນະອັນຍິ່ງໃຫຍ່... ຈາກນັ້ນ, ປະທານ ໄກສອນ ພົມວິຫານ ຍັງສືບຕໍ່ຊີ້ນຳ-ນຳພາລະບອບໃໝ່ ໃຫ້ກ້າວໜ້າຈະເລີນຢ່າງບໍ່ຢຸດຢັ້ງ ໃນຕະຫຼອດຊີວິດຂອງເພິ່ນ, ເຖິງວ່າເພິ່ນຈາກພວກເຮົາໄປແລ້ວ ແຕ່ເພິ່ນໄດ້ປະມໍລະດົກແຫ່ງປະຫວັດສາດທີ່ບໍ່ສາມາດປະເມີນຄ່າ ໄວ້ໃຫ້ພວກເຮົາເດີນຕາມຢ່າງມີຄວາມເອກອ້າງທະນົງໃຈ ແລະ ປະໄວ້ເຊິ່ງຄວາມພາກພູມໃຈ ແລະ ຄວາມເຄົາລົບສັດທາຕໍ່ຜົນງານອັນຍິ່ງໃຫຍ່ຂອງເພິ່ນ ທີ່ມີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ຄົນລາວພວກເຮົາ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍເຊີນຊວນບັນດາທ່ານ, ບັນດາສະຫາຍ ທີ່ເຂົ້າຮ່ວມງານໂຮມຊຸມນຸມ ລຸກຂຶ້ນກົ້ມຫົວໄວ້ອາໄລເຖິງດວງວິນຍານຂອງປະທານ ໄກສອນ ພົມວິຫານ.

ຮຽນທີ່ຊຸມນຸມ,

ວິລະກຳອັນລ້ຳເລີດ ແລະ ຄຸນລັກສະນະພິເສດສະເພາະຂອງປະທານ ໄກສອນ ພົມວິຫານ ໄດ້ສະແດງອອກຜ່ານບົດຂຽນ, ບົດບັນທຶກ, ສາລະຄະດີ, ບົດປະພັນ, ບົດກາບກອນ ແລະ ໃນສຽງຂັບຮ້ອງທຳນອງເພງຂອງຮຸ່ນຄົນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ຢ່າງນັບບໍ່ຖ້ວນ... ໃນເວລາຈຳກັດນີ້, ຂ້າພະເຈົ້າພຽງແຕ່ຈະຍົກເອົາສ່ວນໜຶ່ງມາທົບທວນເຖິງກຽດຕິຄຸນຂອງປະທານ ໄກສອນພົມວິຫານເນື່ອງໃນໂອກາດທີ່ເປັນເລີກງານຍາມດີໃນງານໂຮມຊຸມນຸມສະເຫຼີມສະຫຼອງວັນຄ້າຍວັນເກີດຂອງເພິ່ນ ທີ່ໝູນວຽນມາຄົບຮອບ 105 ປີ ພໍດີໃນມື້ອື່ນນີ້.

ປະທານ ໄກສອນ ພົມວິຫານ ກຳເນີດ ແລະ ເຕີບໃຫຍ່ໃນສະພາບທີ່ປະເທດຊາດຕົກເປັນເມືອງຂຶ້ນ, ສູນເສຍຄວາມເປັນຊາດເອກະລາດ, ປະຊາຊົນລາວບັນດາເຜົ່າ ຕົກເປັນຂ້ອຍຂ້ຳມ້າໃຊ້, ຖືກກົດຂີ່ຂູດຮີດຢ່າງແສນສາຫັດຈາກຕ່າງຊາດແລະລູກແຫຼ້ງຕີນມືຂອງພວກເຂົາ... ຍ້ອນຄວາມຄັບແຄ້ນແໜ້ນໃຈທີ່ເຫັນສະພາບ ຫຼື ປະເທດຊາດຕົກຢູ່ໃນສະພາບແບບນັ້ນ ເພິ່ນໄດ້ເກີດມີຈິດໃຈຮັກເຊື້ອແພງຊາດອັນດູດດື່ມຂຶ້ນມາ ເຊິ່ງເປັນເຫດໃຫ້ເກີດມີຄວາມຕື່ນຕົວການເມືອງ, ມີແນວຄວາມຄິດທີ່ຢາກຊອກຫາເສັ້ນທາງຕໍ່ສູ້ກູ້ຊາດ, ຈຶ່ງໄດ້ຮ່ວມກັບເພື່ອນສະຫາຍຈຳນວນໜຶ່ງ ເຄື່ອນໄຫວປິດລັບ ແລະ ສະໝັກໃຈເຂົ້າຮ່ວມຂະບວນການປະຕິວັດ ຕັ້ງແຕ່ຍັງເຍົາໄວ.

ພາຍໃຕ້ແສງສະຫວ່າງຂອງທິດສະດີປະຕິວັດ ກໍຄືລັດທິມາກສ໌-ເລນິນ ທີ່ປະທານ ໂຮ່ຈິມິນ ໄດ້ນຳເຂົ້າມາສູ່ດິນແດນອິນດູຈີນ ແລະ ໄດ້ສ້າງຕັ້ງພັກກອມມູນິດອິນດູຈີນຂຶ້ນ ເພື່ອນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ ຂອງ 3 ປະເທດ ຫວຽດນາມ, ລາວ ແລະ ກຳປູເຈຍ ນັ້ນ, ປະທານ ໄກສອນ ພົມວິຫານ ໄດ້ເລີ່ມຈາກການເຂົ້າຮ່ວມໃນຂະບວນການຊາວໜຸ່ມຕະລຸມບອນ ເຄື່ອນໄຫວກໍ່ສ້າງຮາກຖານການເມືອງ, ໂຄສະນາຂົນຂວາຍປະຊາຊົນແລະສ້າງໜ່ວຍແກ່ນສານນຳພາຂອງພັກຂຶ້ນ ເພື່ອສ້າງຂະບວນການປະຕິວັດ, ຂະບວນນີ້ ໄດ້ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວແລະ ໄດ້ສ້າງຕັ້ງພັກປະຊາຊົນລາວຂຶ້ນທີ່ກາຍເປັນຫຼັກແຫຼ່ງແກ່ນສານໃນເວລານັ້ນ ເພິ່ນໄດ້ເອົາຕົວເຈືອຈານເຂົ້າກັບຂະບວນການຕໍ່ສູ້ກູ້ຊາດຂອງປະຊາຊົນບັນດາເຜົ່າຕັ້ງແຕ່ຕົ້ນ,ຮ່ວມເປັນຮ່ວມຕາຍກັບພະນັກງານ-ນັກຮົບ,ຮ່ວມທຸກຮ່ວມສຸກກັບປະຊາຊົນເພື່ອນຳພາສ້າງຂະບວນການຕໍ່ສູ້ ຈົນສາມາດຍາດໄດ້ ຈາກໄຊຊະນະນີ້ ໄປສູ່ໄຊຊະນະໃໝ່ໃຫຍ່ຫຼວງຂຶ້ນເປັນກ້າວໆ, ຈົນເຖິງບັນລຸໄດ້ໄຊຊະນະສົມບູນ.

ການທີ່ການປະຕິວັດລາວເຮົາມີຄວາມເຕີບໃຫຍ່ຂະຫຍາຍຕົວໄດ້ຄືດັ່ງກ່າວນັ້ນ ຍ້ອນປະທານ ໄກສອນ ພົມວິຫານ ໄດ້ນຳເອົາທິດສະດີປະຕິວັດສົມທົບເຂົ້າກັບຂະບວນການຮັກຊາດຂອງປະຊາຊົນລາວບັນດາເຜົ່າຢ່າງກົມກຽວ ໂດຍໝູນໃຊ້ຫຼັກມູນທິດສະດີມາກສ໌-ເລນິນ ຢ່າງປະດິດສ້າງ ແລະ ສອດຄ່ອງກັບສະພາບຈຸດພິເສດຕົວຈິງຂອງປະເທດເຮົາ, ເອົາຂະບວນການຮັກຊາດຕິດພັນກັບຂະບວນການປະຕິວັດຂອງໂລກ, ນຳພາຈັດຕັ້ງກອງຕະລຸມບອນປະກອບອາວຸດ, ປຸກລຸກຂົນຂວາຍປະຊາຊົນ ແລະ ສ້າງໄດ້ກຳລັງປະກອບອາວຸດ ຕິດພັນກັບການກໍ່ສ້າງຮາກຖານການເມືອງ ແລະ ສ້າງໄດ້ຖານທີ່ໝັ້ນປະຕິວັດຂຶ້ນຢູ່ແຂວງຫົວພັນ ທັງໄດ້ປະສົມປະສານການເຄື່ອນໄຫວກັບກອງກຳລັງປະກອບອາວຸດ ແລະ ຖານທີ່ໝັ້ນປະຕິວັດແຫ່ງອື່ນໆໃນທົ່ວປະເທດ, ໄດ້ນຳພາເຕົ້າໂຮມກອງໂຄສະນາຂົນຂວາຍປະກອບອາວຸດປະຕິວັດຈາກທົ່ວປະເທດປະກາດສ້າງຕັ້ງເປັນກອງທັບລາວອິດສະຫຼະຂຶ້ນໃນວັນທີ 20 ມັງກອນ 1949 ເຊິ່ງແມ່ນວັນສ້າງ ຕັ້ງກອງທັບປະຊາຊົນລາວໃນປັດຈຸບັນ.

ປະທານ ໄກສອນ ພົມວິຫານ ໄດ້ຮ່ວມກັບບັນດາສະຫາຍນັກປະຕິວັດ ສ້າງຕັ້ງແນວລາວອິດສະຫຼະຂຶ້ນເປັນອົງການສຳພັນທະພາບແນວໂຮມແຫ່ງຊາດ ເປັນຄັ້ງທຳອິດໃນປະຫວັດສາດຊາດລາວ, ກາຍເປັນກຳລັງແຮງປະຕິວັດທີ່ເຂັ້ມແຂງໃນຂະບວນການຕໍ່ສູ້ກູ້ຊາດ ແລະ ນຳໄປສູ່ການສ້າງຕັ້ງພັກປະຊາຊົນລາວ ຂຶ້ນໃນວັນທີ 22 ມີນາ 1955 ເຊິ່ງຖືເປັນຂີດໝາຍສຳຄັນແລະເປັນບາດລ້ຽວປະຫວັດສາດ ໃນການດຳເນີນການປະຕິວັດຊາດ-ປະຊາທິປະໄຕຢູ່ປະເທດພວກເຮົາ ໄປສູ່ຄຸນນະພາບໃໝ່.

ປະທານ ໄກສອນ ພົມວິຫານ ໄດ້ຮ່ວມກັບບັນດາຜູ້ນຳຂອງພັກເຮົາ ຄົ້ນຄວ້າວາງຍຸດທະສາດການຕໍ່ສູ້ຢ່າງຖືກຕ້ອງ ໂດຍໄດ້ສົມທົບການຕໍ່ສູ້ດ້ວຍຫຼາຍຮູບການໄປພ້ອມໆກັນຢ່າງແໜ້ນແຟ້ນ, ເປັນຕົ້ນ ການເປີດສະໜາມຮົບດ້ານການທະຫານ ໄປພ້ອມໆກັບການຕໍ່ສູ້ທາງການເມືອງ, ທາງກົດໝາຍ ແລະ ທາງການທູດ ກໍຄືໄດ້ນຳໃຊ້ຮູບການທັງຕໍ່ສູ້, ທັງເຈລະຈາສ້າງຄວາມຖືກຕ້ອງປອງດອງຊາດ ດ້ວຍການສ້າງຕັ້ງລັດຖະບານປະສົມເຖິງ 3 ຄັ້ງ ແລະ ໄດ້ດຳເນີນຍຸດທະສາດ-ຍຸດໂທບາຍ ອັນນິ່ມນວນ-ຄ່ອງແຄ້ວ, ມີຫຼັກການກັບຝ່າຍກົງກັນຂ້າມ ເຮັດໃຫ້ການປະຕິວັດ ກໍຄືຂະບວນການຕໍ່ສູ້ຂອງກຳລັງຮັກຊາດ ໄດ້ເຕີບໃຫຍ່ຂະຫຍາຍຕົວ, ຍາດໄດ້ໄຊຊະນະເປັນຂັ້ນໆມາ.

ປະທານ ໄກສອນ ພົມວິຫານ ເປັນນັກຍຸດທະສາດທີ່ກຳແໜ້ນຈຸດພິເສດຂອງຄົນລາວ, ສັງຄົມລາວ ທັງຮູ້ສ້າງສະພາວະການປະຕິວັດ ໃຫ້ແກ່ແຕ່ລະສະໜາມຮົບ, ສຸດທ້າຍກໍສາມາດສ້າງກາລະໂອກາດໃຫ້ແກ່ການປະຕິວັດທີ່ເພິ່ນເອີ້ນວ່າ "ພັນປີມີເທື່ອໜຶ່ງ", ດ້ວຍການນຳໃຊ້ "3 ບາດຄ້ອນຍຸດທະສາດ" ທີ່ສາມາດທັບມ້າງກົງຈັກການປົກຄອງຂອງລັດຖະບານຝ່າຍຂວາໄດ້ສຳເລັດແລະຢຶດເອົາອຳນາດການປົກຄອງປະຕິວັດມາມີ ໄດ້ດ້ວຍການໃຊ້ຍຸດທະສາດແບບ "ບົວບໍ່ຊ້ຳ ນ້ຳບໍ່ຂຸ່ນ ແຕ່ສາມາດຈັບປາໄດ້ທັງໝົດ",ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975 ອັນເປັນການໄຂສັງກາດໃໝ່, ສັງກາດແຫ່ງເອກະລາດແຫ່ງຊາດ ແລະ ອິດສະ ຫຼະພາບທີ່ແທ້ຈິງ ໃຫ້ແກ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າຂອງພວກເຮົາ ພາຍຫຼັງທີ່ຊາດເຮົາຕົກເປັນເມືອງສ່ວຍ, ເມືອງຂຶ້ນຂອງຕ່າງຊາດ ມາເປັນເວລານັບຮ້ອຍໆປີ.

ບັນດາສະຫາຍ, ເພື່ອນມິດ ທີ່ຮັກແພງ,

ການຊີ້ນຳ-ນຳພາຂອງພັກພາຍໃຕ້ການນຳຂອງປະທານ ໄກສອນພົມວິຫານພາຍຫຼັງສະຖາປະນາ ສປປລາວ ນັ້ນ ແມ່ນໄລຍະຕົ້ນຂອງການປະຕິບັດໜ້າທີ່ແຫ່ງການປົກປັກຮັກສາໝາກຜົນຂອງການປະຕິວັດແລະໜ້າທີ່ໃນການພັດທະນາປະເທດຊາດດ້ວຍການຮຳບາດແຜສົງຄາມ, ປັບປຸງເສດຖະກິດ-ສັງຄົມ, ຟື້ນຟູການຜະລິດຄືນໃໝ່, ປົວແປງ-ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ໄປພ້ອມໆກັບການຕໍ່ຕ້ານການປອງຮ້າຍ, ມ້າງເພທຳລາຍຢ່າງບໍ່ລົດລະຈາກອິດທິກຳລັງປໍລະປັກ ໄດ້ສຳເລັດຜົນຢ່າງໃຫຍ່ຫຼວງ ເພື່ອເປັນກຳລັງແຮງໃຫ້ແກ່ການສືບຕໍ່ນຳພາປວງຊົນລາວທັງຊາດປົກປັກຮັກສາ ແລະ ສ້າງສາລະບອບໃໝ່; ຈາກນັ້ນ ໄດ້ວາງແນວທາງປ່ຽນແປງໃໝ່ ເພື່ອສືບຕໍ່ບູລະນະແນວທາງນະໂຍບາຍ ເພື່ອກ້າວເດີນຕໍ່ໄປຢ່າງໜັກແໜ້ນ. ໃນເກືອບ 40 ປີແຫ່ງການປະຕິບັດແນວທາງປ່ຽນແປງໃໝ່ ທີ່ມີຜົນສຳເລັດຢ່າງເປັນຮູບປະທຳມານັ້ນ ໄດ້ເປັນທີ່ຮັບຮູ້ກັນດີວ່າ ແນວຄິດ-ຈິນຕະນາການຂອງປະທານ ໄກສອນພົມວິຫານເປັນພື້ນຖານໃຫ້ແກ່ການກຳນົດນະໂຍບາຍ ແລະ ແນວທາງປ່ຽນແປງໃໝ່ຂອງພັກເຮົາທີ່ເປັນແນວທາງແຫ່ງການບູລະນະ, ປະຕິຮູບຮອບດ້ານ ທີ່ມີປະສິດທິຜົນສູງແລະນຳມາເຊິ່ງຜົນສຳເລັດຮອບດ້ານຢ່າງໜ້າພາກພູມໃຈ ຈົນເທົ່າເຖິງທຸກວັນນີ້.

ບັນດາສະຫາຍທີ່ຮັກແພງ,

ຕະຫຼອດຊີວິດປະຕິວັດຂອງປະທານ ໄກສອນ ພົມວິຫານ ໃນຖານະທີ່ເພິ່ນເປັນໃຈກາງ, ເປັນຄັນທຸງຂອງການປະຕິວັດນັ້ນ, ຍາມໃດເພິ່ນກໍຖືສຳຄັນແນວທາງມະຫາຊົນຢ່າງສະເໝີຕົ້ນສະເໝີປາຍ, ເພາະເພິ່ນຖືວ່າ ກຳລັງແຮງຂອງປະຊາຊົນແມ່ນກຳລັງທີ່ບໍ່ບົກແຫ້ງ, ເພິ່ນຈຶ່ງເປັນຕົວແບບຂອງການພົວພັນສະໜິດແໜ້ນ, ໃກ້ຊິດຕິດແທດ, ຮ່ວມສຸກຮ່ວມທຸກກັບປະຊາຊົນບັນດາເຜົ່າ. ເພິ່ນບໍ່ພຽງແຕ່ຄິດຫາວິທີປົດປ່ອຍປະຊາຊົນອອກຈາກຄວາມເປັນຂ້ອຍຂ້າມ້າໃຊ້ເທົ່ານັ້ນ, ແຕ່ຫາກຍັງຄິດຫາວິທີແລະມາດຕະການທີ່ມີປະສິດທິຜົນ ເພື່ອປົດປ່ອຍເອົາປະຊາຊົນລາວບັນດາເຜົ່າອອກຈາກຄວາມທຸກຍາກຫຼ້າຫຼັງ, ນຳເອົາຄວາມຢູ່ດີກິນດີ, ຄວາມຮັ່ງມີຜາສຸກ ມາສູ່ປວງຊົນທັງຊາດ, ຖືການປຸກລະດົມຄວາມຕື່ນຕົວຮັກຊາດຂອງປະຊາຊົນ ແລະ ຖືເອົາການເຕົ້າໂຮມຄວາມສາມັກຄີປອງດອງຂອງບັນດາເຜົ່າ ແລະ ບັນດາຊັ້ນຄົນ ເປັນກຳລັງແຮງຕົ້ນຕໍ; ນອກຈາກນັ້ນ, ເພິ່ນໄດ້ຖືເອົາການຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອຈາກເພື່ອນມິດສາກົນ ຜູ້ຢູ່ໃກ້ ແລະ ຢູ່ໄກ ເຂົ້າໃນການສະໜັບສະໜູນຊ່ວຍເຫຼືອຂະບວນການປະຕິວັດ ແລະ ປົກປັກຮັກສາ ແລະ ພັດທະນາປະເທດເຮົາ. ປະທານ ໄກສອນ ພົມວິຫານ ໄດ້ໃຫ້ຄວາມສຳຄັນເປັນບຸລິມະສິດຕໍ່ກັບຄວາມສຳພັນສູ້ຮົບ ລາວ-ຫວຽດນາມ-ກຳປູເຈຍ, ໃຫ້ຄວາມສຳຄັນຕໍ່ການຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫຼືອຈາກສປຈີນ, ສະຫະພາບໂຊຫວຽດ, ບັນດາປະເທດສັງຄົມນິຍົມອ້າຍນ້ອງ, ບໍ່ລົດລະໃນການຍາດແຍ່ງເອົາການສະໜັບສະໜູນຈາກເພື່ອນມິດທັງຢູ່ໃກ້ ແລະ ຢູ່ໄກ ແລະ ອົງການຈັດຕັ້ງສາກົນໃນໂລກເຂົ້າໃນພາລະກິດປະຕິວັດຊາດ-ປະຊາທິປະໄຕ ແລະ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດເຮົາ... ປະທານ ໄກສອນ ພົມວິຫານ ໄດ້ອຸທິດໝົດສະຕິປັນຍາ, ກຳລັງວັງຊາ ແລະ ເຫື່ອແຮງ ເພື່ອພາລະກິດປະຕິວັດ, ເພື່ອຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າດ້ວຍນ້ຳໃຈຮັກເຊື້ອແພງຊາດອັນດູດດື່ມ, ມີຄວາມຊື່ສັດບໍລິສຸດ, ທ່ຽງທຳ, ມີຄວາມຈິງໃຈ ຕໍ່ການກໍ່ສ້າງພະນັກງານຮຸ່ນສືບທອດ, ດຳລົງຊີວິດແບບລຽບງ່າຍ, ຖະໜອມຖ່ອມຕົວ, ຮ່ຳຮຽນນຳມະຫາຊົນ, ມັກສຶກສາຄົ້ນຄວ້າ-ຮ່ຳຮຽນ ຍົກລະດັບເລື້ອຍໆ...ເຊິ່ງເປັນແວ່ນແຍງອັນໃສແຈ້ງໃຫ້ແກ່ພັກ, ລັດ ແລະ ປະຊາຊົນເຮົາ... ດ້ວຍຄຸນສົມບັດແລະທັດສະນະດັ່ງກ່າວ, ປະທານ ໄກສອນ ພົມວິຫານ ຈຶ່ງໄດ້ຮັບຄວາມເຄົາລົບຮັກແລະຄວາມເຊື່ອໝັ້ນຢ່າງເລິກເຊິ່ງຈາກປະຊາຊົນເຜົ່າຕ່າງໆ. ປະທານ ໄກສອນ ພົມວິຫານ ສົມແລ້ວທີ່ເປັນລູກຜູ້ປະເສີດ ແລະ ເປັນຜູ້ນຳທີ່ແສນເຄົາລົບຮັກຂອງປວງຊົນລາວທັງຊາດ.

ບັນດາທ່ານ, ບັນດາສະຫາຍ ທີ່ຮັກແພງ,

ການລະລຶກເຖິງຄຸນງາມຄວາມດີແລະສຳນຶກບຸນຄຸນອັນໃຫຍ່ຫຼວງຂອງປະທານ ໄກສອນ ພົມວິຫານ ທີ່ພວກເຮົາກຳລັງທົບທວນເນື່ອງໃນໂອກາດວັນຄ້າຍວັນເກີດຂອງເພິ່ນ ຄົບຮອບ 105 ປີ ໃນມື້ນີ້, ພວກເຮົາຈຶ່ງພ້ອມ

ອ່ານຕໍ່ໜ້າ 11




# ສຽງຈາກ ສສຊ ໃນສະພາ

**# ດົ້ນກົບເມກ**

ກອງປະຊຸມສະພາແຫ່ງຊາດ ເລີ່ມແຕ່ອາທິດກ່ອນຮອດປັດຈຸບັນ ປາກົດມີຫາງສຽງທີ່ບັນດາສະມາຊິກສະພາແຫ່ງຊາດ (ສສຊ) ສະເໜີໃຫ້ລັດຖະບານ ຫຼື ກະຊວງກ່ຽວຂ້ອງ ໄດ້ເບິ່ງຄືນໂຄງການພັດທະນາ ຫຼື ບາງນະໂຍບາຍ ທີ່ບໍ່ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນ ເຊິ່ງຜູ້ຂຽນຂໍສະເໜີບາງປະເດັນທີ່ໄດ້ຕິດຕາມຮັບຊົມລາຍການຖ່າຍທອດສົດ. ສສຊ ບາງເຂດ ສະເໜີການປາບປາມການສໍ້ໂກງໃຫ້ເປັນວາລະແຫ່ງຊາດ ເພາະມັນພາໃຫ້ສ່ວນລວມເສຍປະໂຫຍດ ຖ້າວ່າງົບປະມານຫາກບໍ່ໄດ້ນໍາໃຊ້ຢ່າງທົ່ວເຖິງ.

ສສຊ ບາງເຂດ ໄດ້ຍົກປະເດັນຜູ້ກະທໍາຜິດລະເມີດລະບຽບກົດໝາຍນໍາໃຊ້ງົບປະມານບໍ່ບັນລຸຕາມແຜນວາງໄວ້ ເຊັ່ນ: ພະນັກງານລະດັບສູງບາງຄົນ ໄດ້ລະເມີດລະບຽບກົດໝາຍ ແຕ່ບໍ່ໄດ້ຖືກນໍາມາຮັບຜິດຊອບຕາມກົດໝາຍ, ບາດວ່າພະນັກງານນ້ອຍບາງຄົນເຮັດຜິດພຽງໜ້ອຍດຽວ ແຕ່ຕ້ອງໄດ້ລົງວິໄນຈະແຈ້ງ; ຈຸດນີ້ຄືປະເດັນໜ້າຄິດ ແລະ ໜ້າຊົມເຊີຍ ສສຊ ຜູ້ກ້າເວົ້າແທນປະຊາຊົນທີ່ໄດ້ລົງຄະແນນສຽງເລືອກມາເປັນຕົວແທນຢູ່ໃນສະພາ ເຊິ່ງກອງປະຊຸມສະພາແຫ່ງຊາດຜ່ານມາ, ບາງຄັ້ງທ່ານປະທານສະພາແຫ່ງຊາດ ກໍໄດ້ຍົກໃຫ້ເຫັນວ່າ ສສຊ ບາງຄົນ ບໍ່ໄດ້ອອກຄໍາເຫັນຫຍັງໝົດ, ເຂົ້າປະຊຸມເລີກປະຊຸມຕາມວາລະ ກໍໝົດໜ້າທີ່ໄປ ເຊິ່ງມັນສະແດງອອກບ່ອນວ່າ ປະຊາຊົນເລືອກໄປເປັນຕົວແທນຄວນກ້າເວົ້າກ້າສະແດງອອກເຖິງສິ່ງທີ່ປະຊາຊົນເຂົາຮຽກຮ້ອງຕ້ອງການ; ຈຸດນີ້ ກໍເປັນສິ່ງໜ້າຄິດ ຖ້າວ່າຟັງແລ້ວເກັບໄປຄິດນໍ.

ຜູ້ຂຽນຕິດຕາມອ່ານຂ່າວທາງອອນລາຍພໍສັງລວມບາງປະເດັນທີ່ປະທານສະພາແຫ່ງຊາດມີຄໍາເຫັນໃຫ້ພິຈາລະນາເບິ່ງຄືນ ເຊັ່ນ: ເລື່ອງເກັບເງິນ 3,000 ກີບ, ເສັ້ນທາງລົດ BRT, ປະຊາຊົນຜູ້ຕິດຕາມກໍຄິດຫຼາຍນໍາເວລາເພິ່ນກວດພົບເງິນຍັກຍອກສໍ້ໂກງຫຼາຍຕື້ ແຕ່ເກັບກູ້ຄືນໄດ້ພຽງຈໍານວນໜ້ອຍເທົ່ານັ້ນ! ຂໍຊົມເຊີຍ ສສຊ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ມີບັນດາທ່ານຮອງປະທານຄະນະປະຈໍາ ແລະ ກໍາມະການໃນຄະນະປະຈໍາສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ-ອົງການ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສໍາຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈໍາສະພາແຫ່ງຊາດ ທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນແລະກົດໝາຍດັ່ງນີ້:

1). ບົດລາຍງານກ່ຽວກັບການປັບປຸງກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ;

2).ບົດລາຍງານກ່ຽວກັບການກະກຽມວຽກງານເລືອກຕັ້ງ;

3). ບົດລາຍງານໜັງສືສະເໜີຂອງລັດຖະບານຈໍານວນ 9 ຫົວຂໍ້ເນື້ອໃນ ຄື:

(1)ພິຈາລະນາໂຄງການເຂື່ອນໄຟຟ້ານໍ້າເທີນຫີນບູນ ຂອງບໍລິສັດໄຟຟ້າລາວ;

(2)ພິຈາລະນາໜັງສືສະເໜີຂອງລັດຖະບານ ກ່ຽວກັບການຂໍຫັນປ່ຽນທີ່ດິນປ່າໄມ້ເພື່ອນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດໂຄງການລົງທຶນຕ່າງໆ ຄື:

- ການຂໍຫັນປ່ຽນທີ່ດິນປ່າໄມ້ ທີ່ນອນໃນເຂດອຸທິຍານແຫ່ງຊາດ ນາກາຍ - ນໍ້າເທີນ ເພື່ອນໍາໃຊ້ເຂົ້າໃນໂຄງການຂຸດຄົ້ນແລະປຸງແຕ່ງແຮ່ຄໍາຢູ່ເມືອງຄໍາເກີດ ແຂວງບໍລິຄໍາໄຊ;
- ການຂໍຫັນປ່ຽນທີ່ດິນປ່າໄມ້ ທີ່ນອນໃນເຂດປ່າປ້ອງກັນແຫ່ງຊາດ ຍອດນໍ້າງຽບ ເພື່ອນໍາໃຊ້ເຂົ້າໃນໂຄງການຂຸດຄົ້ນແລະປຸງແຕ່ງແຮ່ຫາຍາກຢູ່ເມືອງຄູນ ແຂວງຊຽງຂວາງ;
- ການຂໍຫັນປ່ຽນທີ່ດິນປ່າໄມ້ທີ່ນອນໃນເຂດປ່າຜະລິດແຫ່ງຊາດ ລ້ອງຄາວ-ລ້ອງຄານ ເພື່ອນໍາໃຊ້ເຂົ້າໃນໂຄງການຂຸດຄົ້ນ, ປຸງແຕ່ງແຮ່ຄໍາ ແລະ ແຮ່ຕິດພັນ ຢູ່ເມືອງພູກູດ ແຂວງຊຽງຂວາງ;
- ການຂໍຫັນປ່ຽນທີ່ດິນປ່າໄມ້ທີ່ນອນໃນປ່າຜະລິດແຫ່ງຊາດ ຍອດເຍືອງ-ຜາແດງ ແລະ ປ່າປ້ອງກັນແຫ່ງຊາດ ສິບແປນ-ຫ້ວຍໂກ້ ເພື່ອນໍາໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຫາຍາກ ຢູ່ເມືອງກວັນ ແຂວງຫົວພັນ;
- ການຂໍຫັນປ່ຽນທີ່ດິນປ່າໄມ້ທໍາມະຊາດທີ່ນອນໃນປ່າຜະລິດແຫ່ງຊາດນໍ້າປາ-ຫ້ວຍວີ ເພື່ອນໍາໃຊ້ເຂົ້າໃນການຂຸດຄົ້ນ, ປຸງແຕ່ແຮ່ຊືນ ແລະ ແຮ່ເງິນ ຢູ່ເມືອງຊານໄຊ ແຂວງອັດຕະປື;
- ການຂໍຫັນປ່ຽນປະເພດທີ່ດິນປ່າໄມ້ ທີ່ນອນໃນປ່າສະຫງວນ ພູອິນຖິ່ນລະດັບແຂວງ ເພື່ອນໍາໃຊ້ເຂົ້າໃນໂຄງການຂຸດຄົ້ນ ແລະ ປຸງແຕ່ງຖ່ານຫີນ ຢູ່ເມືອງຫີນເຫີບ ແລະ ເມືອງເຟືອງ ແຂວງວຽງຈັນ;
- ການຂໍຫັນປ່ຽນທີ່ດິນປ່າໄມ້ ທີ່ນອນໃນປ່າສະຫງວນ ນໍ້າມວນ-ພູຈອມວອຍ ແລະ ອຸທິຍານແຫ່ງຊາດ ນາກາຍ-ນໍ້າເທີນ ເພື່ອນໍາໃຊ້ເຂົ້າໃນໂຄງການໄຟຟ້າພະລັງງານລົມ ເຈືອງເຊີນ 2 ຢູ່ເມືອງຄໍາເກີດ ແລະ ເມືອງໄຊຈໍາພອນ ແຂວງບໍລິຄໍາໄຊ;
- ການສະເໜີຂໍດັດແກ້ມູນຄ່າໂຄງການກໍ່ສ້າງຊົນລະປະທານອ່າງເກັບນໍ້າຫ້ວຍອາໄກ້ ຢູ່ເມືອງພີນ ແຂວງສະຫວັນນະເຂດ (ໄລຍະທີ 1) ເພື່ອກໍານົດເຂົ້າໃນແຜນການລົງທຶນຂອງລັດ.

**(ນາງ ກຸກກິກ ບຸດດາໄຊ)**



## ສສຊ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມປະຈໍາປີ 2025 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 13 ໄດ້ຈັດຂຶ້ນໃນວັນທີ 15 ທັນວານີ້ ທີ່ສະພາປະຊາຊົນແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ໂດຍມີການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ13, ທ່ານ ບຸນໂຈມ ອຸບົນປະເສີດ ເລຂາພັກແຂວງ, ທ່ານນາງດາວວອນ ໄຊສຸລຽນຮອງເລຂາພັກແຂວງ, ປະທານຄະນະກໍາມະການປົກຄອງແຂວງ, ບັນດາທ່ານ ສສຊ ປະຈໍາເຂດເລືອກຕັ້ງພ້ອມດ້ວຍພະແນກການ, ອົງການຕ່າງໆ ອ້ອມຂ້າງແຂວງແລະພາກສ່ວນກ່ຽວຂ້ອງ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ 5 ປີ (2021-2025),ປະຈໍາປີ2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານຮອດກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດທີ X ຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13. ນອກນັ້ນ, ໄດ້ຮັບຟັງການລາຍງານຄືນຈາກທ່ານຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າແຂວງ ຕາມມະຕິກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13 ສະບັບເລກທີ 66/ຄສຊຂ, ລົງວັນທີ 23 ທັນວາ2024ວ່າດ້ວຍການຮັບຮອງເອົາບົດລາຍງານກ່ຽວກັບການຂຸດຄົ້ນແຮ່ທາດທົດລອງ ພາຍໃນແຂວງສະຫວັນນະເຂດແລະກ່ຽວກັບການຈັດຕັ້ງປະຕິບັດໂຄງການກໍ່ສ້າງໄຟຟ້າຈາກພະລັງງານລົມ ຢູ່ແຂວງສະຫວັນນະເຂດ; ການລາຍງານຄືນຈາກທ່ານຫົວໜ້າພະແນກກະສິກໍາ ແລະ ສິ່ງແວດລ້ອມແຂວງ ຕາມມະຕິກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 13 ສະບັບເລກທີ 03/ຄສຊຂ, ລົງວັນທີ 17 ມັງກອນ 2024 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດການຈັດສັນແລະການຄຸ້ມຄອງ3ປະເພດປ່າພາຍໃນແຂວງສະຫວັນນະເຂດ.

ທ່ານ ກົງແກ້ວ ມີວໍລະຈັກ ໄດ້ມີຄໍາເຫັນກ່າວປິດວ່າ: ຕະຫຼອດໄລຍະເວລາດໍາເນີນກອງປະຊຸມ, ບັນດາທ່ານສະມາຊິກສະພາແຫ່ງຊາດໄດ້ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງອັນສູງສົ່ງຂອງຕົນ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ໂດຍສຸມສະຕິປັນຍາເຂົ້າໃສ່ການຄົ້ນຄວ້າປະກອບຄໍາຄິດຄໍາເຫັນ ພ້ອມທັງໄດ້ຊັກຖາມຢ່າງສ້າງສັນ, ພາວະວິໄສ, ມີຫຼັກການ ແລະ ມີເຫດມີຜົນ ຢ່າງເລິກເຊິ່ງກົງໄປກົງມາຕໍ່ບັນດາພາກສ່ວນທີ່ຂຶ້ນລາຍງານ ແລະ ຊີ້ແຈງຕໍ່ກອງປະຊຸມ. ບັນຫາທີ່ນໍາມາສະເໜີຢູ່ໃນກອງປະຊຸມໃນຄັ້ງນີ້ ລ້ວນແລ້ວແຕ່ແມ່ນຄວາມຮຽກຮ້ອງຕ້ອງການ ແລະ ຄວາມມຸ່ງມາດປາຖະໜາຂອງພໍ່ແມ່ປະຊາຊົນ; ພາກສ່ວນກ່ຽວຂ້ອງ ກໍໄດ້ເອົາໃຈໃສ່ຂຶ້ນຊີ້ແຈງທຸກໆບັນຫາທີ່ສະມາຊິກສະພາແຫ່ງຊາດຕັ້ງຂຶ້ນດ້ວຍຄວາມຮັບຜິດຊອບ ເຮັດໃຫ້ການພິຈາລະນາ-ຮັບຮອງເອົາບັນດາບັນຫາຕ່າງໆ ບົນຈິດໃຈແຫ່ງຄວາມເປັນເອກະພາບທາງດ້ານທັດສະນະ, ແນວຄິດ, ລະບຽບຫຼັກການ ແລະ ຄວາມຮັບຜິດຊອບບົນພື້ນຖານສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ, ລັດຖະທໍາມະນູນແລະກົດໝາຍຂອງລັດ.



**(ກົງທະນູຄໍາ ພິພັດເສລີ)**



ສຸຂະພາບທາຍໂຣຄ

# ຜົນດີ ແລະ ຜົນເສຍ ຂອງຜັກເຊີນນາລີ

**# ຮຽບຮຽງໂດຍ: ກະເດົາ**



ມາຮູ້ຈັກກັບອີກດ້ານໜຶ່ງຂອງຜັກເຊີນນາລີ (Celery) ຖືເປັນກະແສທີ່ກຳລັງໄດ້ຮັບຄວາມນິຍົມຢ່າງກວ້າງຂວາງ ໂດຍສະເພາະໃນກຸ່ມຄົນທີ່ຮັກສຸຂະພາບ, ມັກອອກກຳລັງກາຍ ແລະ ກຳລັງຄວບຄຸມນ້ຳໜັກ ເຊິ່ງນິຍົມດື່ມນ້ຳເຊີນນາລີ (Celery) ແບບເອົາຈິງເອົາຈັງ ທັງນີ້, ບັນດາຜູ້ຊ່ຽວຊານຕ່າງໆຈາກຫຼາຍສະຖາບັນ ກໍໄດ້ອອກມາເປີດເຜີຍທັງຜົນດີ ແລະ ຜົນເສຍຂອງຜັກຊະນິດນີ້.

ຜັກເຊີນນາລີ ມີທັງດີ ແລະ ຮ້າຍ ຮັບປະທານແບບໃດໃຫ້ໄດ້ປະໂຫຍດ ມື້ນີ້ພວກເຮົາຈະພາທ່ານມາຮູ້ຈັກອີກດ້ານໜຶ່ງຂອງຜັກເຊີນນາລີ ເຊິ່ງຈະສົ່ງຜົນແນວໃດຕໍ່ຮ່າງກາຍຂອງເຮົາມາຊອກຮູ້ພ້ອມໆກັນເລີຍ:

ຜັກເຊີນນາລີ ບໍ່ໄດ້ມີຜົນຫຍັງສຳລັບການຫຼຸດນ້ຳໜັກ ພຽງແຕ່ຊ່ວຍຫຼຸດອາການບວມນ້ຳເທົ່ານັ້ນ ພຽງແຕ່ທ່ານດື່ມນ້ຳໃຫ້ພຽງພໍ ຫຼື ຮັບປະທານໂຊດຽມໃນປະລິມານພໍດີໃນແຕ່ລະວັນກໍບໍ່ຈຳເປັນຕ້ອງກິນ ຫຼື ດື່ມນ້ຳເຊີນນາລີ.

ຜັກເຊີນນາລີ ມີລິດໃນການຫຼຸດຄວາມດັນ ເພາະມີສານໂພແທດຊຽມຢ່າງຫຼວງຫຼາຍ ແຕ່ຜູ້ທີ່ມີບັນຫາ ແລະ ເປັນພະຍາດຫົວໃຈແມ່ນຕ້ອງລະວັງເປັນພິເສດ ລວມເຖິງຄົນທີ່ມີຄວາມດັນຕ່ຳກໍຍິ່ງບໍ່ຄວນຮັບປະທານ.

ຜັກເຊີນນາລີປະກອບມີສານໄນເຕຣຫຼາຍສົມຄວນ ຫາກຮັບປະທານຫຼາຍເກີນໄປ ກໍຈະກາຍເປັນໂຕກໍ່ສານມະເຮັງໄດ້ເຊັ່ນກັນ.

ຜັກເຊີນນາລີຖ້າຫາກຮັບປະທານຫຼາຍເກີນໄປຈະສົ່ງຜົນໃຫ້ຜິວໜັງໄວຕໍ່ແສງແດດ ແລະ ຖ້າຫາກຮັບປະມານຫຼາຍເກີນໄປກໍຈະສົ່ງຜົນໃຫ້ໄທຣອຍເຮັດວຽກບໍ່ເປັນປົກກະຕິ ດັ່ງນັ້ນ, ຈຶ່ງບໍ່ຄວນຮັບປະທານຫຼາຍເກີນໄປ ແລະ ກ່ອນທີ່ຈະຮັບປະທານກໍຄວນລ້າງໃຫ້ດີດ້ວຍນ້ຳສະອາດ.

ຈາກກະແສທີ່ວ່າ ຮັບປະທານເຊີນນາລີ ຈະຊ່ວຍໃຫ້ຂັບຖ່າຍໄດ້ດີກໍເນື່ອງຈາກວ່າປະລິມານເສັ້ນໃຍອາຫານເຂົ້າສູ່ຮ່າງກາຍຫຼາຍເກີນໄປ ຈຶ່ງເຮັດໃຫ້ລຳໄສ້ລະຄາຍເຄືອງ ແລ້ວສົ່ງຜົນໃຫ້ຖ່າຍຫຼາຍຂຶ້ນ ແຕ່ນັ້ນກໍບໍ່ໄດ້ໝາຍຄວາມວ່າທ່ານກຳລັງດີທອກ(Detox) ຢ່າເຂົ້າໃຈຜິດ ແຕ່ນັ້ນຄືອາການເຈັບທ້ອງ.

ສະຫຼຸບວ່າ ຄວນຮັບປະທານຜັກເຊີນນາລີ ແຕ່ພໍດີກໍພໍ ເພາະມັນກໍບໍ່ໄດ້ຊ່ວຍຫຍັງເປັນພິເສດດັ່ງທີ່ເປັນກະແສໃນຂະນະນີ້ ເພາະສະນັ້ນ ຄວນຮັບປະທານໃຫ້ຄືກັບພືດຜັກທົ່ວໄປແມ່ນດີທີ່ສຸດ.

**ຂໍ້ມູນຈາກ:**
**www.laopost.com**




# ຮັກຊາດ ຮັກບ້ານ

**# ປາຍປາກການ້ອຍ**

❄ ຮັກຊາດຄວນຮັກບ້ານ
ຮັກຜູ້ນຳຄົນຫານ
ຊູຊ່ວຍກັນແປງສ້າງ
ອະນາໄມຮອບຮູ້

ຂານຕໍ່ແນວທາງ
ຍ່ອມເສຍສະຫຼະສູ້
ເຮືອນຊານໃຫ້ເຮືອງຮຸ່ງ
ຂະຫຍັນເລື້ອຍສະອາດຕາ

❄ ຮັກຊາດ ຕ້ອງຮັກບ້ານ
ຝຶກຝົນອະນາໄມ
ນອກແລະໃນເຮືອນນັ້ນ
ກາຍທັງໃຈພໍ່າພ້ອມ

ຖານເຂດເຮືອນຊານຕົນ
ສິ່ງຂອງເກັບມ້ຽນ
ຫຼີ້ງງາມຕາດູເດັ່ນ
ງາມກ້ຽງດັ່ງດຽວ ນັ້ນນາ

❄ ຢ່າໄດ້ປະປ່ອຍຖິ້ມ
ວາງຂະຊາຍຕາມທາງ
ທັງຂອງເສຍເຫຼືອໃຊ້
ພິຈາລະນາແຍກຖິ້ມ

ແນວເນົ່າຍັງຍາຍ
ພໍ່າຖົງຢາງທັງເຈ້ຍ
ຫຼວງຫຼາຍໝົດຄ່າ
ເກັບມ້ຽນຖືກຖັງ

❄ ຄັນບໍ່ເກັບກອບມ້ຽນ
ແນວເໜົ່າມູນເໜັນ
ບາງອັນຍ່ອຍສະລາຍໄດ້
ອັນໃດຍ່ອຍບໍ່ໄດ້

ວາງເປົ່າປົວໄປ
ອິ່ມເອືອນສະອານອ້າງ
ນຳໄປເປັນປຸຍຕໍ່
ຈັບໄຈ້ກ່ອນວາງ ທ່ານເອີຍ!

❄ ຄັນບໍ່ຊູຊ່ວຍຊວ້ານ
ຮັກສາອານາໄມ
ຈັບວາງກວດເກັບມ້ຽນ
ບ້ານເມືອງເຮົາຊິອາດເອ້

ແຮງຮ່ວມໂຮມກັນ
ຮ່ວມໃຈຊູຊວ້ານ
ຂອງເສຍຕາມບ່ອນ
ເຕັມເປື້ອນສິ່ງເສດເຫຼືອ ແທ້ໃດ!



# ຫັກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມຫ້ຽນ**

❄ **ຈົ່ມ**ເຊີຍວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ທີ່ໄດ້ໝູນວຽນມາບັນຈົບຄົບຮອບ 105 ປີ (13/12/1920-13/12/2025) ຄຸນຄວາມດີທ່ານສ້າງ ສານສືບເປັນຕຳນານ ປວງປະຊາຊົນລາວ ທົ່ວທານີແຄວ້ນ ເດີນໄຕ່ຕາມເຫັນຮູ້ ບຸນຄຸນຍິ່ງໃຫຍ່ ປະທານສອນສ້າງ ໄວ້ ໂລກາຮູ້ທົ່ວເຖິງ ຊອບແລ້ວ!

❄ **ຈົ່ມ**ເຊີຍຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ໃນນັ້ນໄດ້ຮັບຮອງເອົາຫຼາຍບັນຫາສຳຄັນຂອງຊາດ ກໍຄືທ້ອງຖິ່ນ ໂດຍເສັດສິ້ນລົງຢ່າງເປັນທາງການ ດ້ວຍຜົນງານອັນຍິ່ງໃຫຍ່ຕໍ່ໄປຟັງຂ່າວຂໍ້ ຖະແຫຼງເປີດຕາມມາວ່າເຂດໃດຊິຕາມຄິວ ຕໍ່ເປັນທີສອງໃຫ້ ສື່ມວນຊົນເຮົາໄດ້ ຊຽນຜົນງານອອກຂ່າວ ກ່າວໃຫ້ພົງພີ່ນ້ອງ ປະຊາຮູ້ທົ່ວເຖິງ ນັ້ນແລ້ວ!

## ຊອບຍິ້ມ

**# ພົ້ງລຶ່ງ**

### ເລື່ອງ: ຍັງບໍ່ແລ້ວ

ຜົວ-ເມຍຄູ່ໜຶ່ງ ຢືນດ່າກັນຢູ່ແຄມທາງແຫ່ງໜຶ່ງຢ່າງດຸເດືອດ; ທັນໃດນັ້ນ, ມີລົດຄັນໜຶ່ງເບຼກແຕກຄວບຄຸມບໍ່ໄດ້ ພຸ່ງລົ້ນໄປແຄມທາງ ບ່ອນຄູ່ຜົວເມຍຢືນດ່ຽງກັນ!!!

ຜູ້ເປັນເມຍຈຶ່ງດຶງຜູ້ເປັນຜົວ ເພື່ອຫຼົບຫຼີກຈາກການຕຳຂອງລົດໄດ້ຢ່າງທັນທ່ວງທີ

ຄົນກໍຮີບຫຸ້ມມາເບິ່ງຢ່າງຫຼວງຫຼາຍ ພ້ອມທັງຍ້ອງຜູ້ເປັນເມຍວ່າ ເຫດການນີ້ເຮັດໃຫ້ເຫັນວ່າຜູ້ເປັນເມຍຮັກຜົວຫຼາຍ

ຜູ້ເປັນເມຍ ບໍ່ໄດ້ຮັກ, ກູຍັງດ່າມັນບໍ່ທັນແລ້ວເທື່ອ.



## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ຢູ່ສູງໃຫ້ນອນຂວ້ຳ
ຢູ່ຕ່ຳໃຫ້ນອນຫງາຍ

ລັດຖະສະພາຕ່າງປະເທດ

# ສະພາແຫ່ງຊາດຫວຽດນາມ ປິດ ກອງປະຊຸມສະໄໝສາມັນເທື່ອທີ 10

(Xinhua) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດຫວຽດນາມ ຊຸດທີ XV ໄດ້ປິດໃນວັນທີ 11 ທັນວາ ພາຍຫຼັງດຳເນີນມາແຕ່ວັນທີ 20 ຕຸລາຜ່ານມາ.

ໃນສູນທອນພິດປິດກອງປະຊຸມ, ເຈິ່ນ ແທ່ງ ເໝິນ ປະທານສະພາແຫ່ງຊາດ ກ່າວວ່າ: ສະມາຊິກສະພາ ໄດ້ຮັບຮອງເອົາຮ່າງກົດໝາຍ 51 ສະບັບ ແລະ ມະຕິ 39 ສະບັບ ໃນສະໄໝປະຊຸມນີ້, ກວມເອົາ 30% ຂອງບັນດານິຕິກຳທີ່ໄດ້ຮັບການອະນຸມັດໃໝ່ໃນຕະຫຼອດອາຍຸການຊຸດທີ XV ພ້ອມທັງເນັ້ນໜັກວ່າ: ບັນດາກົດໝາຍ ແລະ ມະຕິທີ່ຜ່ານການອະນຸມັດນັ້ນແມ່ນຕອບສະໜອງຄວາມຕ້ອງການໃນການປະຕິບັດຢ່າງທັນການ ແລະສ້າງຂອບກົດໝາຍໃຫ້ແກ່ໄລຍະໃໝ່.



# ບັງກລາເທດ ກຽມຈັດການ ເລືອກຕັ້ງທົ່ວໄປ ແລະ ລົງປະຊາມະຕິ




(Xinhua) - ຄະນະກຳມະການເລືອກຕັ້ງຂອງບັງກລາເທດ (EC) ປະກາດວ່າ, ການເລືອກຕັ້ງຄູ່ຂະໜານຄັ້ງທຳອິດຂອງປະເທດ ຄື: ການເລືອກຕັ້ງສະພາແຫ່ງຊາດ ຊຸດທີ XIII ແລະ ການລົງປະຊາມະຕິ ຈະຈັດຂຶ້ນໃນວັນທີ 12 ກຸມພາປີໜ້າ.

ເອເອັມເອັມ ນາຊີຣ໌ ອຸດດິນ (AMM Nasir Uddin) ປະທານຄະນະກຳມະການເລືອກຕັ້ງ ປະກາດເລື່ອງນີ້ໃນການຖະແຫຼງການທາງໂທລະພາບທີ່ບັນທຶກໄວ້ລ່ວງໜ້າໃນຄືນວັນພະຫັດທີ 11 ທັນວາຜ່ານມາ, ເຂົາກ່າວວ່າ ການຍື່ນໃບສະໝັກຈະຕ້ອງສຳເລັດພາຍໃນວັນທີ 29 ທັນວາ ແລະ ຈະໄດ້ຮັບການພິຈາລະນາຢ່າງຖີ່ຖ້ວນຕັ້ງແຕ່ວັນທີ 30 ທັນວາ ຫາ 4 ມັງກອນ 2026.

EC ກ່າວເມື່ອເດືອນພະຈິກວ່າ ມີຜູ້ລົງທະບຽນເລືອກຕັ້ງຫຼາຍກວ່າ 127 ລ້ານຄົນ.

ວັນທີ 10 ທັນວາ, ມູຮຳໝັດ ຢູນຸສ (Muhammad Yunus) ຫົວໜ້າທີ່ປຶກສາຂອງລັດຖະບານຮັກສາການ (ຫົວໜ້າລັດຖະບານ ຫຼື ນາຍົກລັດຖະມົນຕີຮັກສາການ) ກ່າວວ່າ ການເລືອກຕັ້ງລະດັບຊາດຄັ້ງທີ 13 ເປັນໂອກາດທາງປະຫວັດສາດທີ່ຈະສ້າງສາບັງກລາເທດຄືນໃໝ່ ຫຼັງຈາກເຫດການລຸກຮືຂຶ້ນຄັ້ງໃຫຍ່ໃນເດືອນກໍລະກົດ 2024 ແລະ ເນັ້ນໜັກວ່າ ການເລືອກຕັ້ງຈະຕ້ອງດຳເນີນການຢ່າງຍຸຕິທຳ ແລະ ເຊື່ອຖືໄດ້.

ສະພາແຫ່ງຊາດບັງກລາເທດ ແມ່ນອົງການນິຕິບັນຍັດແບບສະພາດຽວ ປະກອບດ້ວຍສະມາຊິກ 350 ຄົນ ໂດຍແບ່ງອອກເປັນ 2 ປະເພດຄື: 300 ຄົນ ຖືກເລືອກຕັ້ງໂດຍກົງ ແລະ 50 ຄົນ ສະຫງວນໄວ້ໃຫ້ແມ່ຍິງ.

ນອກຈາກການເລືອກຕັ້ງທົ່ວໄປແລ້ວ, ຈະຈັດການລົງປະຊາມະຕິລະດັບຊາດ ກ່ຽວກັບຂໍ້ສະເໜີການປະຕິຮູບປະເທດ ເຊິ່ງມຸ່ງຫວັງທີ່ຈະຫັນປ່ຽນຮູບແບບການເມືອງແລະສະຖາບັນຂອງປະເທດ ແລະ ໃຫ້ການຮັບຮູ້ທາງລັດຖະທຳມະນູນຕໍ່ການລຸກຮືຂຶ້ນໃນປີ 2024.

ການຕັດສິນໃຈຄັ້ງສຳຄັນໃນການລົງປະຊາມະຕິທີ່ຈະມາເຖິງ ຄືການສ້າງຕັ້ງສະພາທີ 2 ໃນລັດຖະສະພາ. ຫາກໄດ້ຮັບການອະນຸມັດ, ທຸກການປ່ຽນແປງລັດຖະທຳມະນູນໃນອະນາຄົດຈະຕ້ອງໄດ້ຮັບການສະໜັບສະໜູນຈາກສະພາສູງໃໝ່ນີ້; ສະມາຊິກສະພາສູງ 100 ຄົນ ຈະຖືກຈັດຕັ້ງຂຶ້ນຕາມອັດຕາສ່ວນຂອງຄະແນນສຽງທີ່ພັກການເມືອງໄດ້ຮັບໃນການເລືອກຕັ້ງລະດັບຊາດແລະການປັບປຸງລັດຖະທຳມະນູນໃດໆ ຈະຕ້ອງໄດ້ຮັບການອະນຸມັດຈາກສຽງສ່ວນຫຼາຍຂອງສະພາສູງ.

ຄະນະກຳມະການເລືອກຕັ້ງ ໄດ້ໂຈະການລົງທະບຽນພັກການເມືອງຂອງອະດີດນາຍົກລັດຖະມົນຕີ ນາງ ເຊກ ຮາສິນາ (Sheikh Hasina) ເຊິ່ງເປັນການຫ້າມບໍ່ໃຫ້ພັກດັ່ງກ່າວ ເຂົ້າຮ່ວມການເລືອກຕັ້ງໃນອະນາຄົດ.

ເດືອນພະຈິກຜ່ານມາ, ສານພິເສດໃນນະຄອນຫຼວງດາກາ ໄດ້ຕັດສິນປະຫານຊີວິດອະດີດນາຍົກລັດຖະມົນຕີທີ່ຖືກຂັບໄລ່ອອກຈາກຕຳແໜ່ງ ໂດຍທີ່ນາງບໍ່ຢູ່ໃນສານ ໃນຂໍ້ຫາກໍ່ອາຊະຍາກຳຕໍ່ມະນຸດຊາດທີ່ໄດ້ກະທຳລະຫວ່າງການລຸກຮືຂຶ້ນໃນເດືອນກໍລະກົດ 2024 ຂອງປະເທດ.

# ອົດສະຕຣາລີ ເລີ່ມໃຊ້ກົດໝາຍຫ້າມເດັກ ອາຍຸຕ່ຳກວ່າ 15 ປີ ເຂົ້າເຖິງສື່ສັງຄົມ




(AFP) - ອົດສະຕຣາລີ ກາຍເປັນປະເທດທຳອິດໃນໂລກທີ່ບັງຄັບໃຊ້ກົດໝາຍຫ້າມຜູ້ມີອາຍຸຍັງບໍ່ເຖິງ 16 ປີ ໃຊ້ເຄືອຂ່າຍສັງຄົມອອນລາຍ.

ກົດໝາຍຄວາມປອດໄພທາງອິນເຕີເນັດສະບັບປັບປຸງທີ່ຫ້າມບໍ່ໃຫ້ຜູ້ມີອາຍຸຕ່ຳກວ່າ 16 ປີ ໃຊ້ເຄືອຂ່າຍສັງຄົມອອນລາຍ ຫຼື ສື່ສັງຄົມ ທຸກປະເພດ ມີຜົນບັງຄັບໃຊ້ຢ່າງເປັນທາງການຕັ້ງແຕ່ເວລາທ່ຽງຄືນວັນທີ 10 ທັນວາຜ່ານມາ ຕາມເວລາຂອງອົດສະຕຣາລີ.

ເວທີໃດກໍຕາມທີ່ໃຫ້ບໍລິການໃນອົດສະຕຣາລີ ແຕ່ປະຕິເສດປະຕິບັດຕາມກົດໝາຍດັ່ງກ່າວຫຼືບໍ່ດຳເນີນການຢ່າງມີປະສິດທິພາບເພື່ອລະງັບບຸກຄົນອາຍຸຍັງບໍ່ເຖິງ 16 ປີ ຈາກການໃຊ້ສື່ສັງຄົມ ອາດຈະຖືກປັບໃໝສູງສຸດ 49.5 ລ້ານໂດລາອົດສະຕຣາລີ (ປະມານ 33 ລ້ານໂດລາສະຫະລັດ).

ເຖິງແມ່ນລັດຖະບານອົດສະຕຣາລີຍອມຮັບວ່າ ກົດໝາຍນີ້ ເຊິ່ງເປັນສະບັບທຳອິດຂອງໂລກ ທີ່ມີການຄວບຄຸມການເຂົ້າເຖິງສື່ສັງຄົມຢ່າງເຂັ້ມງວດຂອງຜູ້ທີ່ຍັງມີອາຍຸບໍ່ເຖິງ 16 ປີ "ຈະຍັງມີຊ່ອງວ່າງ", ແຕ່ລັດຖະບານຄາດຫວັງວ່າ ບໍລິສັດເຕັກໂນໂລຊີ "ຈະດຳເນີນການຕາມສົມຄວນ" ເຖິງແມ່ນຍັງບໍ່ມີການຕີຄວາມໝາຍຢ່າງເປັນທາງການວ່າ "ຕາມສົມຄວນ" ນັ້ນ ໝາຍຄວາມວ່າແນວໃດ.

ກ່ອນໜ້ານີ້, ອົງການຄວບຄຸມຄວາມປອດໄພທາງອິນເຕີເນັດຂອງອົດສະຕຣາລີເນັ້ນໜັກວ່າ ການກວດສອບອາຍຸຂອງຜູ້ໃຊ້ "ເປັນຄວາມຮັບຜິດຊອບແຕ່ພຽງຜູ້ດຽວ» ຂອງບັນດາບໍລິສັດເຕັກໂນໂລຊີ ເຊິ່ງສ້າງຄວາມບໍ່ພໍໃຈໃຫ້ແກ່ຜູ້ປະກອບການລາຍໃຫຍ່ຫຼາຍແຫ່ງ; ແຕ່ໃນທີ່ສຸດແລ້ວ, ເກືອບທຸກບໍລິສັດຍອມປະຕິບັດຕາມ ໂດຍແຕ່ລະບໍລິສັດໄດ້ກຳນົດມາດຕະການຂອງຕົນເອງ, ບໍ່ວ່າຈະເປັນການຕ້ອງສະແດງບັດປະຈຳຕົວທີ່ລັດຖະບານອອກໃຫ້ ຫຼື ການໃຊ້ AI ເພື່ອປະເມີນອາຍຸ.

ຂະນະທີ່ຄວາມຄິດເຫັນຂອງຊາວອົດສະຕຣາລີ ຍັງແຕກຕ່າງກັນ, ໄວໜຸ່ມຈຳນວນບໍ່ໜ້ອຍກ່າວວ່າ "ບໍ່ຊ່ວຍຫຍັງ" ແລະ ຈະຊອກຫາວິທີອື່ນໃນການເຂົ້າເຖິງບັນຊີສື່ສັງຄົມຂອງຕົນເອງ ເຖິງວ່າຈະມີຄວາມຫຍຸ້ງຍາກຫຼາຍຂຶ້ນ; ໃນເວລາດຽວກັນ, ຜູ້ປົກຄອງຈຳນວນບໍ່ໜ້ອຍເຫັນດີຈາກການທີ່ບຸດຫຼານຂອງຕົນເອງກາຍເປັນເຫຍື່ອຈາກການຂົ່ມເຫັງທາງອອນລາຍ ຫຼື ໝົກມຸ່ນ (preoccupied) ກັບການໃຊ້ສື່ສັງຄົມຫຼາຍເກີນໄປ.

# Kyrgyzstan ຮັບຮອງຜົນການເລືອກຕັ້ງລ່ວງໜ້າ



(Xinhua) - ຄະນະກຳມະການເລືອກຕັ້ງສູນກາງ (Central Election Commission - CEC) ຂອງສາທາລະນະລັດກຽກກິດ ຫຼື ກຽກກິດສະຖານ ໄດ້ຮັບຮອງຜົນການລົງຄະແນນສຽງຂອງການເລືອກຕັ້ງສະພາສູງສຸດລ່ວງໜ້າ ໂດຍມີຜູ້ສະໝັກ 87 ຄົນ ໄດ້ຮັບເລືອກຕັ້ງ, ຕາມມະຕິທີ່ຄະນະກຳມະການ ໄດ້ຮັບຮອງເມື່ອວັນທີ 10 ທັນວາຜ່ານມາ; ມະຕິລະບຸວ່າ: CEC ຮັບຮອງການເລືອກຕັ້ງໃນເຂດເລືອກຕັ້ງແບບຫຼາຍທີ່ນັ່ງ 30 ເຂດ, ແຕ່ຜົນການເລືອກຕັ້ງໃນເຂດທີ 13 ຖືກປະກາດເປັນໂມຄະ ເນື່ອງຈາກລະເມີດກົດໝາຍເລືອກຕັ້ງ.

ມີຜູ້ມາໃຊ້ສິດອອກສຽງທັງໝົດ 1,584,446 ຄົນ, ກວມເອົາ 36.90% ຂອງປະຊາຊົນຫຼາຍກວ່າ 4 ລ້ານຄົນ ທີ່ລົງທະບຽນໃນບັນຊີລາຍຊື່ຜູ້ມີສິດເລືອກຕັ້ງ.

ຄະນະກຳມະການເລືອກຕັ້ງສູນກາງເປີດໜ່ວຍປ່ອນບັດ 2,492 ແຫ່ງ, ໜ່ວຍປ່ອນບັດຫ່າງໄກສອກຫຼີກ 27 ແຫ່ງໃນທົ່ວປະເທດ ແລະ ໜ່ວຍປ່ອນບັດຢູ່ຕ່າງປະເທດ 100 ແຫ່ງ.

ຕາມຂໍ້ມູນຂອງ CEC, ມີຜູ້ສະໝັກ 460 ຄົນ ໄດ້ເຂົ້າຮ່ວມການເລືອກຕັ້ງທີ່ຈັດຂຶ້ນຢູ່ 30 ເຂດເລືອກຕັ້ງແບບຫຼາຍທີ່ນັ່ງ, ໂດຍແຕ່ລະເຂດມີຜູ້ແທນ 3 ຄົນ ທີ່ໄດ້ຮັບການເລືອກຕັ້ງພາຍໃຕ້ລະບົບສຽງສ່ວນຫຼາຍ.

ເມື່ອວັນທີ 25 ກັນຍາຜ່ານມາ, ສະພາສູງສຸດໄດ້ລົງຄະແນນສຽງຍຸບຕົນເອງ ໂດຍອ້າງເຖິງຄວາມເປັນຫ່ວງກ່ຽວກັບໄລຍະເວລາທີ່ໃກ້ກັນຂອງການເລືອກຕັ້ງປະທານາທິບໍດີ ແລະ ສະພາສູງສຸດທີ່ຈະມາເຖິງ; ວັນທີ 30 ກັນຍາ, ປະທານາທິບໍດີ ຊາດີຣ໌ ຈາປາຣອຟ (Sadyr Japarov) ໄດ້ລົງນາມໃນລັດຖະດຳລັດກຳນົດການເລືອກຕັ້ງສະມາຊິກສະພາສູງສຸດລ່ວງໜ້າ ໃນວັນອາທິດທີ 30 ພະຈິກ 2025.

ຕາມກຳນົດເດີມ, ການເລືອກຕັ້ງສະມາຊິກສະພາສູງສຸດໄດ້ກຳນົດໄວ້ໃນເດືອນພະຈິກ 2026 ແລະ ການເລືອກຕັ້ງປະທານາທິບໍດີ ໃນເດືອນມັງກອນ 2027.

ສະພາສູງສຸດ ເປັນອົງການນິຕິບັນຍັດ ທີ່ມີສະມາຊິກ 90 ຄົນ, ມີອາຍຸການ 5 ປີ.

## ສູນທອນພົດ...

(ຕໍ່ຈາກໜ້າ 7)

ກັນຮ່ຳຮຽນເອົາຄຸນສົມບັດສິນທຳປະຕິວັດຂອງເພິ່ນ ເພື່ອໝູນໃຊ້ເຂົ້າໃນການປະຕິບັດວຽກງານ ແລະ ການດຳລົງຊີວິດຂອງພວກເຮົາແຕ່ລະຄົນ. ໃນໂອກາດນີ້, ຂ້າພະເຈົ້າຂໍສະເໜີແລກປ່ຽນກັບທ່ານຜູ້ເຂົ້າຮ່ວມຊຸມນຸມແລະທ່ານຜູ້ຊົມ-ຜູ້ຟັງໃນທົ່ວປະເທດບາງຄຳເຫັນຈຳນວນໜຶ່ງດັ່ງນີ້:

ໜຶ່ງ, ເພີ່ມທະວີຄວາມສາມັກຄີເປັນເອກະພາບ ແລະ ຄວາມເປັນປຶກແຜ່ນຂອງຊາດໃຫ້ກາຍເປັນ“ຫີນສີລາອັນໝັ້ນແກ່ນ” ໃຫ້ແກ່ກ້ອນກຳລັງມະຫາສາມັກຄີພາຍໃນຊາດ.

ພັກເຮົາ ເຄື່ອນໄຫວນຳພາຕາມຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ ແລະ ມີການແບ່ງງານ ໃຫ້ບຸກຄົນ ແລະ ການຈັດຕັ້ງ ຮັບຜິດຊອບຢ່າງຈະແຈ້ງ, ການປະຕິບັດນະໂຍບາຍຕາມຫຼັກການນີ້ແມ່ນການສ້າງຄວາມເປັນປຶກແຜ່ນພາຍໃນພັກ ແລະ ພາຍໃນຊາດໄດ້ເປັນຢ່າງດີ. ດັ່ງນັ້ນ, ການເຊີດຊູຄວາມຮັບຜິດຊອບການເມືອງ, ການປະຕິບັດໜ້າທີ່ຂອງແຕ່ລະຄົນ ທີ່ໄດ້ຮັບມອບໝາຍດ້ວຍຄວາມພາກພຽນ, ອົດທົນ ແລະ ຈົງຮັກພັກດີນັ້ນ ແມ່ນກຳລັງແຮງຂອງການສ້າງຄວາມເຂັ້ມແຂງພາຍໃນຊາດ, ຄວາມເຂັ້ມແຂງນີ້ ຈະສາມາດຜ່ານຜ່າໄດ້ອຸປະສັກໃນສະພາບທີ່ວລ້ຽວຫົວຕໍ່ທີ່ສ່ຽງເປັນສ່ຽງຕາຍ ທີ່ອາດຈະເກີດຂຶ້ນບົນເສັ້ນທາງເດີນປະເທດເຮົາ ດັ່ງທີ່ເພິ່ນເຄີຍເຕືອນໄວ້ວ່າ:“ຍິ່ງຫຍຸ້ງຍາກ ກໍຍິ່ງອົດທົນ, ຍິ່ງສັບສົນ ກໍຍິ່ງທຸ່ນທ່ຽງ, ຍິ່ງລະອຽດລະອ້ຽວຂ້ຽວຂາດກໍຍິ່ງສ້າງໄດ້ຄວາມສະຫຼາດສ່ອງໃສ”.

ສອງ, ພວກເຮົາຈະຕ້ອງໄດ້ເຊີດຊູຄວາມເປັນແບບຢ່າງນຳໜ້າທາງດ້ານຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດລຽບງ່າຍ, ປອດໃສຂາວສະອາດທີ່ປະທານ ໄກສອນ ພົມວິຫານ ໄດ້ສ້າງເປັນຕົວແບບໄວ້ໃນການດຳລົງຊີວິດ ແລະ ການຊີ້ນຳ-ນຳພາຂອງເພິ່ນ.

ພວກເຮົາ ຕ່າງກໍໄດ້ຮູ້-ໄດ້ເຫັນນຳກັນວ່າ ປະທານ ໄກສອນ ພົມວິຫານ ແລະ ການນຳຮຸ່ນກໍ່ຕັ້ງຂອງພັກເຮົາ ລ້ວນແຕ່ມີອິດທິພົນບົດບາດສູງ, ຍ້ອນຄວາມເປັນແບບຢ່າງນຳໜ້າໃນຄວາມເປັນນັກປະຕິວັດທີ່ກ້າແກ່ນ, ສະເໝີຕົ້ນສະເໝີປາຍ, ບໍ່ວ່າຈະຢູ່ໃນສະໄໝຕໍ່ສູ້ກູ້ຊາດ ກໍຄືໃນເວລາພັກເຮົາໄດ້ເປັນພັກກຳອຳນາດ, ພວກເພິ່ນຕ່າງກໍໄດ້ຮັບຕຳແໜ່ງ, ໜ້າທີ່ທີ່ສຳຄັນ, ສູງສຸດ ຂອງພັກ-ຂອງລັດ, ແຕ່ປະທານ ໄກສອນ ພົມວິຫານ ແລະ ການນຳຂອງພັກເຮົາ ກໍຍັງຢຶດໝັ້ນທັດສະນະມະຫາຊົນ, ຖືປະຊາຊົນເປັນກົກ, ເປັນກຳລັງແຮງທີ່ບໍ່ເຫືອດແຫ້ງ ແລະ ເປັນເປົ້າໝາຍເຄື່ອນໄຫວຮັບໃຊ້ຂອງພັກ; ເວລາໃດກໍມີທັດສະນະມະຫາຊົນຢ່າງກວ້າງຂວາງ, ພົວພັນສະໜິດແໜ້ນ ທັງລົງໃກ້ຊິດຕິດແທດ, ກຳແໜ້ນສະພາບແນວຄິດ ແລະ ຄວາມມຸ່ງມາດປາຖະໜາຂອງສະມາຊິກພັກ, ພະນັກງານ-ນັກຮົບແລະປະຊາຊົນລາວບັນດາເຜົ່າ; ມີຄວາມເປັນຫ່ວງເປັນໄຍຕໍ່ຜົນປະໂຫຍດ ແລະ ຄວາມຢູ່ດີກິນດີຂອງປະຊາຊົນ, ເຮັດທຸກສິ່ງທຸກຢ່າງເພື່ອຕອບສະໜອງຜົນປະໂຫຍດພື້ນຖານຂອງປະຊາຊົນ.

ປະທານ ໄກສອນ ພົມວິຫານເຄີຍເຕືອນພວກເຮົາວ່າ: ເວລາທີ່ພັກເປັນພັກກຳອຳນາດ, ພະນັກງານ-ສະມາຊິກພັກ ຈະເກີດພະຍາດອາຍາສິດ, ເອກະຊົນ, ເປັນອາຍາເຈົ້ານາຍ, ເຫັນແກ່ຕົວ, ພັກພວກແລະທ້ອງຖິ່ນຄັບແຄບ, ສໍ້ລາດບັງຫຼວງ...ພວກເຮົາທຸກຄົນຄວນຈົດຈຳຄຳຕັກເຕືອນນີ້ຂອງເພິ່ນ ເພື່ອປັບປຸງແກ້ໄຂ.

ສາມ, ຍົກສູງຄວາມເປັນເຈົ້າການ, ປະດິດສ້າງ ໃນການປັບປຸງ-ບູລະນະແນວທາງ, ແຜນນະໂຍບາຍ ໃຫ້ແທດເໝາະ, ສອດຄ່ອງກັບເງື່ອນໄຂ, ສະພາບຈຸດພິເສດໃນແຕ່ລະໄລຍະຂອງການປະຕິວັດໃນປະເທດ.

ປະທານ ໄກສອນ ພົມວິຫານ ມີຄວາມພາກພຽນ, ມານະອົດທົນສູງໃນການສຶກສາຄົ້ນຄວ້າດ້ານທິດສະດີພື້ນຖານຂອງລັດທິມາກສ໌-ເລນິນ, ຮ່ຳຮຽນບົດຮຽນຂອງຕ່າງປະເທດ ແລະ ນຳມາໝູນໃຊ້ຢ່າງມີການເລືອກເຟັ້ນ ແລະ ເພິ່ນເອົາໃຈໃສ່ຮຽນຮູ້ຈາກພຶດຕິກຳຕົວຈິງ ທັງມີຄວາມສະດຸ້ງໄວ ແລະ ມີໄຫວພິບສູງຕໍ່ການຜັນແປຂອງສະພາບການຕ່າງໆ; ດ້ວຍເຫດນັ້ນ, ເພິ່ນຈຶ່ງມີຄວາມກ້າຫານປັບປຸງບູລະນະແນວທາງ ໃຫ້ມີຄວາມສອດຄ່ອງກັບສະພາບແວດລ້ອມໃນແຕ່ລະເງື່ອນໄຂຢ່າງປະດິດສ້າງ, ທັງຮູ້ໝູນໃຊ້ຍຸດໂທບາຍທີ່ແທດເໝາະ ເພື່ອບັນລຸເປົ້າໝາຍຍຸດທະສາດ, ທັງກຳແໜ້ນກາລະໂອກາດອັນເອື້ອອຳນວຍແລະຮູ້ນຳໃຊ້ຢ່າງວ່ອງໄວ ແລະ ທັນການ.

ຕົວຢ່າງ: ໃນເວລາທີ່ສະພາບການເມືອງ-ສັງຄົມຂອງຄ້າຍສັງຄົມນິຍົມເອີຣົບຕະເວັນອອກເກີດວິກິດການ, ປະທານ ໄກສອນ ພົມວິຫານ ໄດ້ມີຄວາມສະດຸ້ງໄວຕໍ່ສະພາບການ, ບໍ່ລັງເລຢຸດໆຢ່ອນໆ, ເດັດດ່ຽວຕັດສິນໃຈຮ່ວມກັບໝູ່ສະຫາຍການນຳ ດຳເນີນການປ່ຽນແປງໃໝ່; ກ່ອນອື່ນໝົດ ແມ່ນປ່ຽນແປງໃໝ່ດ້ານຈິນຕະນາການ, ການປັບປຸງປ່ຽນແປງດ້ານກົນໄກ, ການຄຸ້ມຄອງ-ບໍລິຫານລັດ, ແຍກພາລະບົດບາດຊີ້ນຳ-ນຳພາຂອງພັກ ໃຫ້ສອດຄ່ອງກັບການນຳພາການຄຸ້ມຄອງບໍລິຫານດ້ານເສດຖະກິດ, ກຳນົດແຈ້ງການຄຸ້ມຄອງດ້ານມະຫາພາກ ແລະ ຈຸລະພາກຂອງບັນດາຫົວໜ່ວຍການຜະລິດ-ທຸລະກິດ, ການໃຊ້ເຄື່ອງມືດ້ານເສດຖະກິດ-ການເງິນ ເພື່ອຄຸ້ມຄອງ-ດັດສົມເສດຖະກິດ ຫາກບໍ່ແມ່ນການໃຊ້ແຕ່ຄຳສັ່ງບໍລິຫານ... ໃນການປ່ຽນແປງໃໝ່ນັ້ນ ຕ້ອງຢຶດໝັ້ນໃນຈຸດໝາຍສັງຄົມນິຍົມ, ປ່ຽນແປງໃໝ່ ຕ້ອງຮອບດ້ານ, ແຕ່ຕ້ອງມີຂັ້ນຕອນ ແລະ ບາດກ້າວອັນເໝາະສົມ. ເພິ່ນເນັ້ນຢ້ຳເລື້ອຍໆວ່າ ຢາກປ່ຽນແປງໃໝ່ໄດ້ດີ ຕ້ອງປະດິດສ້າງ, ປົດປ່ອຍແນວຄິດອອກຈາກລັດທິຄຳພີ, ແຂງກະດ້າງ, ກົນຈັກຕາຍຕົວ, ປົດປ່ອຍແນວຄິດທີ່ບໍ່ສອດຄ່ອງກັບພຶດຕິກຳຕົວຈິງ. ສິ່ງດັ່ງກ່າວນັ້ນ, ສ່ອງແສງເຖິງມານະຈິດປະຕິວັດບຸກ, ຄວາມປີຊາສາມາດ, ຄວາມກ້າຫານ, ປະດິດສ້າງ, ຄວາມເປັນເອກະລາດ ໃນການກຳນົດແນວທາງ, ແຜນນະໂຍບາຍຂອງປະທານ ໄກສອນພົມວິຫານ ແລະ ການນຳຂອງພັກເຮົາໃນເວລານັ້ນ ເຊິ່ງຜ່ານການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍໄດ້ຕີລາຄາຢ່າງຈະແຈ້ງແລ້ວ; ສະນັ້ນ, ພວກເຮົາດຳເນີນການແກ້ໄຂໃນຊຸມປີຕໍ່ໜ້າພາຍຫຼັງຮັບຮອງເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເພື່ອຕອບສະໜອງຄວາມເລັ່ງທວງຂອງການພັດທະນາກ້າວຂຶ້ນຂອງປະເທດຊາດເຮົາ.

ສີ່, ຢຶດໝັ້ນ ແລະ ເສີມຂະຫຍາຍຈິດໃຈຊາດ, ເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ສົມທົບຢ່າງແໜ້ນແຟ້ນລະຫວ່າງລັດທິຮັກຊາດອັນແທ້ຈິງ ກັບລັດທິສາກົນອັນຜ່ອງໃສ ເພື່ອເສີມຂະຫຍາຍກຳລັງແຮງພາຍໃນຊາດ ສົມທົບກັບກຳລັງແຮງຂອງຍຸກສະໄໝ ເຂົ້າໃນການພັດທະນາປະເທດຊາດກ້າວຂຶ້ນ.

ໃນຊຸມປີຕໍ່ໜ້ານີ້, ພວກເຮົາຈະຂຸດຄົ້ນຄວາມອາດສາມາດບົ່ມຊ້ອນແລະທ່າແຮງຂອງພາຍໃນປະເທດສົມທົບກັບການຍາດແຍ່ງເອົາການຮ່ວມມືຈາກພາຍນອກຢ່າງເປັນເຈົ້າການ ເພື່ອສ້າງໃຫ້ມີກຳລັງແຮງໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ກ້າວຂຶ້ນຕື່ມບາດກ້າວໜຶ່ງ ໂດຍຢຶດໝັ້ນແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການຂອງພັກ, ສຸມໃສ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນໃຫ້ມີການຫັນປ່ຽນຈະແຈ້ງ; ຄົ້ນຄວ້າ ແລະ ປະດິດສ້າງໃໝ່ ໃນການໝູນໃຊ້ ແລະ ຕໍ່ຍອດແນວຄິດ ໄກສອນ ພົມວິຫານ ເຂົ້າໃນການນຳພາພາລະກິດປະຕິວັດ, ສົມທົບແໜ້ນ ແລະ ມີການເລືອກເຟັ້ນລະຫວ່າງບົດຮຽນຂອງພັກເຮົາ ກັບບົດຮຽນຂອງເພື່ອນມິດສາກົນ ທີ່ແທດເໝາະກັບສະພາບຂອງປະເທດເຮົາ ຕາມແນວທາງສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ສາມາດຢືນດ້ວຍລຳແຄ່ງລຳຂາຂອງຕົນເອງ ແລະ ກ້າວອອກສູ່ໂລກໄດ້ຢ່າງໝັກແໜ້ນ.

ຫ້າ, ປະທານ ໄກສອນ ພົມວິຫານ ເຄີຍໃຫ້ນະໂຍບາຍໄວ້ວ່າ: “ເອົາການສຶກສາໄປກ່ອນກ້າວໜຶ່ງ” ແລະ ເສີມຂະຫຍາຍຄຸນຄ່າທີ່ເປັນເອກະລັກວັດທະນະທຳຂອງຊາດ, ເພິ່ນເຄີຍສັ່ງສອນວ່າ: ““ເສຍວັດທະນະທຳ ແມ່ນເສຍຊາດ”.

ໃນຊຸມປີຕໍ່ໜ້າ ພວກເຮົາຕ້ອງເອົາໃຈໃສ່ພັດທະນາຄົນລາວໃນທຸກດ້ານ, ສ້າງສັງຄົມທີ່ປະຊາຊົນເປັນເຈົ້າ, ສະເໝີພາບ, ຍຸຕິທຳ ແລະ ສີວິໄລ, ຈຸດໝາຍລວມແມ່ນຕ້ອງນຳພາພັດທະນາຄົນລາວໃຫ້ມີຄວາມພ້ອມໃນທຸກດ້ານ ເປັນກຳລັງຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ, ການສ້າງຄວາມຈະເລີນ ແລະ ຄວາມຢູ່ດີກິນດີທາງດ້ານວັດຖຸ ກັບການສ້າງຄວາມສີວິໄລທາງດ້ານຈິດໃຈ, ເອົາໃຈໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ເພີ່ມສັກກະຍາພາບຂອງຄົນລາວໃຫ້ສູງຂຶ້ນເພື່ອສ້າງຄົນລາວໃຫ້ກາຍເປັນທຶນແຫ່ງຊັບພະຍາກອນມະນຸດຂອງຊາດ, ກາຍເປັນພົນລະເມືອງທີ່ມີຄຸນນະພາບສູງຂຶ້ນແລະສາມາດປັບໂຕເຂົ້າກັບສະພາບການຜັນແປທີ່ຈະເກີດຂຶ້ນໄດ້ຢ່າງຮອບດ້ານ, ຮັບປະກັນໃຫ້ປະຊາຊົນລາວບັນດາເຜົ່າສາມາດຊົມໃຊ້ໝາກຜົນຂອງການປ່ຽນແປງໃໝ່ ກໍຄືການພັດທະນາຢ່າງຍຸຕິທຳ ເຊິ່ງແມ່ນຄວາມປາຖະໜາອັນສູງສົ່ງຂອງປະທານ ໄກສອນ ພົມວິຫານ ແລະ ອຸດົມການອັນສະເໝີຕົ້ນສະເໝີປາຍຂອງພັກເຮົາ.

ຫົກ, ປະທານ ໄກສອນ ພົມວິຫານ ໄດ້ເອົາໃຈໃສ່ຢ່າງຈິດຈໍ່ຕໍ່ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຖືປະຊາຊົນເປັນກົກ... ດັ່ງນັ້ນ, ພວກເຮົາທີ່ກຳລັງຜັນຂະຫຍາຍຄວາມເອົາໃຈໃສ່ ແລະ ຄວາມມຸ່ງມາດປາຖະໜາຂອງເພິ່ນ, ພວກເຮົາຕ້ອງເລັ່ງລັດພັດທະນາຊົນນະບົດ, ເຂດຫ່າງໄກສອກຫຼີກ ໂດຍເອົາປະຊາຊົນເປັນກົກ, ເອົາຊົນນະບົດເປັນເປົ້າໝາຍຂອງການພັດທະນາ, ສ້າງເງື່ອນໄຂໃຫ້ປະຊາຊົນເຂົ້າເຖິງທຶນ, ເຂົ້າເຖິງການສຶກສາ, ເຂົ້າເຖິງເຕັກໂນໂລຊີໃໝ່, ໃຫ້ປະຊາຊົນຮູ້ວິທີການທຳມາຫາກິນແບບໃໝ່, ສ້າງວິຖີຊີວິດແບບໃໝ່ ທີ່ມີການພັດທະນາກ້າວໜ້າຂຶ້ນຢ່າງບໍ່ຢຸດຢັ້ງ.

ບັນດາສະຫາຍ ທີ່ຮັກແພງທັງຫຼາຍ,

ປະທານ ໄກສອນ ພົມວິຫານ ໄດ້ສ້າງຄຸນງາມຄວາມດີອັນໃຫຍ່ຫຼວງໃຫ້ແກ່ພັກແລະແກ່ຊາດເຮົາ, ອຸດົມການ ແລະ ການອຸທິດຂອງເພິ່ນ ແມ່ນຕິດແໜ້ນກັບພາລະກິດປະຕິວັດຂອງພັກເຮົາ. ຂ້າພະເຈົ້າ ຮຽກຮ້ອງມາຍັງທົ່ວພັກ, ທົ່ວລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ຈົ່ງສາມັກຄີກັນເປັນປຶກແຜ່ນ,ພ້ອມກັນສືບທອດ ແລະ ເສີມຂະຫຍາຍພາລະກິດປະຕິວັດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງພວກເຮົາ ໃຫ້ເຂົ້າສູ່ຊີວິດຕົວຈິງ.

ວັນເວລາໄດ້ຜ່ານພົ້ນໄປ, ພາລະກິດປະຕິວັດຂອງພັກເຮົາ ກໍຄືແນວທາງປ່ຽນແປງໃໝ່ທີ່ປະທານ ໄກສອນ ພົມວິຫານ ໄດ້ລິເລີ່ມແລະນຳພາມາແຕ່ຕົ້ນນັ້ນ ໄດ້ນຳການປ່ຽນແປງໃໝ່ຢ່າງເລິກເຊິ່ງ, ຮອບດ້ານ ແລະ ນັບມື້ນັບເຂົ້າສູ່ລວງເລິກ, ປະເທດຊາດໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ. ໃນຈຸດເວລາຄືແນວນີ້, ພວກເຮົາຍິ່ງມີຄວາມຊາບຊຶ້ງໃຈໃນພາລະກຳອັນລ້ຳເລີດຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ປະໄວ້ໃຫ້ປະຊາຊົນລາວບັນດາເຜົ່າຂອງພວກເຮົາ ແລະພວກເຮົາຈະເດັດດ່ຽວໜຽວແໜ້ນສືບຕໍ່ສ້າງເປັນກຳລັງແຮງເພື່ອພັດທະນາຕໍ່ໆໄປ.

ປະທານ ໄກສອນ ພົມວິຫານ ສົມແລ້ວທີ່ເປັນວິລະບູລຸດທີ່ຍິ່ງໃຫຍ່ຂອງຊາດລາວ, ເປັນນັກປະຕິວັດທີ່ອົງອາດກ້າແກ່ນ, ນັກຮັກຊາດຜູ້ຍິ່ງໃຫຍ່, ລູກຜູ້ປະເສີດຂອງປະຊາຊົນລາວບັນດາເຜົ່າ.

ປະທານ ໄກສອນ ພົມວິຫານຍືນຍົງໃນພາລະກິດຂອງພັກເຮົາ ແລະ ຈະປະທັບຢູ່ໃນດວງໃຈຂອງປະຊາຊົນລາວຕະຫຼອດໄປ!

**(ຂໍຂອບໃຈ)**

ເຝົ້າເບິ່ງ ໄດ້ຍິນ

# ພັດທະນາເສດຖະກິດ ໂດຍໃຊ້ປັນຍາປະດິດເສີມກຳລັງ

❖ ວິເສດ ສະແຫວງສຶກສາ

ມີຂ່າວອອກມາຈາກປະເທດ ສ.ເກົາຫຼີ ຫວ່າງບໍ່ເທິງມານີ້ເອງວ່າ ອີກ 3 ປີຂ້າງໜ້າ ບັນດາຫົວໜ່ວຍເສດຖະກິດຂະໜາດນ້ອຍ ແລະ ຂະໜາດກາງໃນທົ່ວປະເທດ ຈະໄດ້ຮັບພະລັງຂັບເຄື່ອນດ້ວຍປັນຍາປະດິດ ຫຼື ເອໄອ (AI), ນີ້ບໍ່ແມ່ນແຜນລ້າ ແຕ່ເປັນແຜນການທີ່ມີຄວາມຈິງຈັງຕັ້ງໜ້າຄັກແນ່. ບັນດາກະຊວງທີ່ເປັນເຈົ້າການລົງລາຍເຊັນຮັບຮອງເອົາບົດບັນທຶກຄວາມເຂົ້າໃຈຮ່ວມກ່ຽວກັບແຜນການດັ່ງກ່າວ ລວມມີ: ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງການຄ້າ, ກະຊວງອຸດສາຫະກຳ ແລະ ຊັບພະຍາກອນ, ແລະ ກະຊວງທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ; ບົດບັນທຶກຄວາມເຂົ້າໃຈດັ່ງກ່າວ ໄດ້ເນັ້ນໃຫ້ລັດຖະບານ ສ.ເກົາຫຼີ ເອົາບົດບາດທີ່ຕັ້ງໜ້າ, ແຂງແຮງ ແລະ ວ່ອງໄວ ໃນການພັດທະນາເຕັກໂນໂລຊີ AI. ໃນປັດຈຸບັນ, ການນຳໃຊ້ AI ຢູ່ຂະແໜງອຸດສາຫະກຳຂອງ ສ.ເກົາຫຼີ ນັ້ນ ມີຈັງຫວະວ່ອງໄວກວ່າການນຳໃຊ້ AI ຢູ່ຕາມບໍລິສັດຂັ້ນທ້ອງຖິ່ນ, ນີ້ລະຄືຊ່ອງວ່າງທີ່ທາງການ ສ.ເກົາຫຼີ ຕ້ອງການລຶບລ້າງໃຫ້ໝົດໄປ. 4 ກະຊວງທີ່ຮ່ວມຮັບຮອງເອົາບົດບັນທຶກຄວາມເຂົ້າໃຈນັ້ນ ຕ່າງກໍໃຫ້ຄຳໝັ້ນສັນຍາວ່າ ຈະສຸມທຸກຄວາມອາດສາມາດ ກໍຄືປະສົບການເຂົ້າໃສ່ການພັດທະນາຕະຫຼາດ AI ເພື່ອໃຫ້ບັນດາຫົວໜ່ວຍທຸລະກິດ ລິເລີ່ມໃໝ່ ກໍຄືເສດຖະກິດຂະໜາດນ້ອຍ ແລະ ກາງ ໄດ້ນຳໃຊ້ AI ຢ່າງທົ່ວເຖິງ ພາຍໃນ 3 ປີຂ້າງໜ້າ; ແນວໃດກໍດີ ແຜນການເປີດກວ້າງການນຳໃຊ້ AI ຢູ່ໃນ ສ.ເກົາຫຼີ ເວົ້າລວມ, ເວົ້າສະເພາະກໍແມ່ນໃນຫົວໜ່ວຍເສດຖະກິດຂະໜາດນ້ອຍ ແລະ ກາງນີ້ ອາດໄດ້ຮັບຜົນກະທົບພໍສົມຄວນຈາກການຈຳກັດຂອງ ສປຈີນ ໃນການສົ່ງອອກແຮ່ຫາຍາກ ທີ່ມີຄວາມຈຳເປັນທີ່ສຸດໃນການພັດທະນາເຄື່ອງມືດິຈິຕອນລວມທັງ AI.

ຂ່າວຕ່າງປະເທດ (ວຽງຈັນທາມ) ໄດ້ໃຫ້ຮູ້ໃນວັນທີ 13 ພະຈິກນີ້ວ່າ ຂະແໜງອຸດສາຫະກຳ ສ.ເກົາຫຼີ ພວມຕົກຢູ່ໃນສະພາບຈົນຕາແຈ ຍ້ອນຂາດແຮ່ຫາຍາກຈາກ ສປຈີນ; ບໍລິສັດຜະລິດລົດຣຸນໄດຂອງເກົາຫຼີ ໄດ້ຮັບຜົນກະທົບແຮງ ເພາະຂາດແຮ່ຫາຍາກທີ່ເອີ້ນວ່າ ແມັກເນັດ (Magnet) ທີ່ຈຳເປັນໃຊ້ເພື່ອທົດລອງລົດໃນແຕ່ລະຂັ້ນຕອນຂອງການຜະລິດ, ໃນປັດຈຸບັນ ທາງບໍລິສັດຜະລິດລົດຣຸນໄດ ໄດ້ສົ່ງພະນັກງານໄປ ສປຈີນ ເພື່ອຮັບປະກັນການສະໜອງແຮ່ຫາຍາກ Magnet ຈາກ ສປຈີນ.

ເລື່ອງສຸດທ້າຍຈາກ ສ.ເກົາຫຼີ ໃນບົດນີ້ກໍຍັງກ່ຽວງວຽນໆກັບການນຳໃຊ້ອຸປະກອນດິຈິຕອນເຊັ່ນເດີມ ຄືເລື່ອງທາງການ ສ.ເກົາຫຼີ ໄດ້ປະກາດມາດຕະການຫ້າມໃຊ້ໂທລະສັບມືຖືຢູ່ຕາມໂຮງຮຽນຂັ້ນປະຖົມ ແລະ ມັດທະຍົມທັງໝົດພາຍໃນປະເທດ, ກົດໝາຍທີ່ບັນຈຸຂໍ້ຫ້າມດັ່ງກ່າວມີຜົນສັກສິດນັບແຕ່ເດືອນມີນາ 2026 ເປັນຕົ້ນໄປ; ການຍົກລະດັບຂໍ້ຫ້າມຂຶ້ນເປັນກົດໝາຍນີ້ ກໍແມ່ນເພື່ອຈຳກັດການນຳໃຊ້ ແລະ ຄອບຄອງອຸປະກອນອັດສະລິຍະໂດຍນັກຮຽນຊັ້ນປະຖົມ ແລະ ມັດທະຍົມ ເພື່ອປົກປ້ອງສິດໃນການຮຽນຮູ້ຂອງນັກຮຽນ ແລະ ຄວາມອາດສາມາດໃນການສິດສອນຂອງຄູອາຈານ.




#ບ່າວກະບື

**ຄວາມ**ລັບແມ່ນສິ່ງທີ່ຄົນເຮົາເລົ່າໃຫ້ພຽງຄົນດຽວຊາບເປັນແຕ່ລະຄັ້ງໄປ.

#BAOKBU

The secret is something you tell only to one person at a time.







● ໂດຍ : ພູຜາ






## ປະທານ...

(ຕໍ່ຈາກໜ້າ 1)

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບອັນອົບອຸ່ນຖານສະຫາຍອ້າຍນ້ອງເຊິ່ງເປັນການປະກອບສ່ວນຮັດແໜ້ນ ແລະ ເພີ່ມພູນຄຸນສ້າງສາຍພົວພັນມິດຕະພາບລະຫວ່າງສອງປະເທດ ທີ່ໄດ້ຮັບການຍົກລະດັບເປັນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ທັງຕີລາຄາສູງຕໍ່ຜົນການພົບປະ, ເຮັດວຽກ ລະຫວ່າງອົງການໄອຍະການປະຊາຊົນສູງສຸດຂອງສອງປະເທດ ລາວ-ຫວຽດນາມ, ຫວຽດນາມ-ລາວ ເຊິ່ງສອງຝ່າຍໄດ້ມີການພົວພັນຮ່ວມມືທີ່ດີນຳກັນຕະຫຼອດມາ ໂດຍມີການແລກປ່ຽນບົດຮຽນນຳກັນໃນຫຼາຍບັນຫາທີ່ສຳຄັນ ແລະ ເຕັມໄປດ້ວຍໄມຕີຈິດມິດຕະພາບຖານສະຫາຍອ້າຍນ້ອງໃນຄອບຄົວດຽວກັນ;ພ້ອມກັນທົບທວນຄືນໝາກຜົນການຮ່ວມມືນຳກັນໃນໄລຍະຜ່ານມາ ແລະ ກຳນົດທິດທາງແຜນການຮ່ວມມືໃນຕໍ່ໜ້າ ເພື່ອຈະໄດ້ພ້ອມກັນສືບຕໍ່ປະຕິບັດໜ້າທີ່ການເມືອງຂອງຕົນໃຫ້ແຮງແຂງ, ເປັນການປະກອບສ່ວນສຳຄັນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອົງການໄອຍະການປະຊາຊົນຂອງສອງປະເທດ ໃຫ້ຮັບປະກັນໄດ້ເຖິງຄວາມຍຸຕິທຳແລະການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງລັດ ແລະ ປະຊາຊົນ. ພ້ອມນັ້ນ, ສະຫາຍຍັງກ່າວວ່າ: ສະພາແຫ່ງຊາດ ພ້ອມທີ່ຈະສືບຕໍ່ສ້າງ ແລະ ປັບປຸງບັນດາກົດໝາຍທີ່ກ່ຽວຂ້ອງກັບວຽກງານການດຳເນີນຄະດີແລະການຕິດຕາມກວດກາ ເພື່ອເປັນພື້ນຖານອັນໜັກແໜ້ນແຂງແກ່ນໃຫ້ແກ່ການປະຕິບັດໜ້າທີ່ຂອງອົງການໄອຍະການແລະອົງການຍຸຕິທຳອື່ນໆໃຫ້ມີປະສິດທິຜົນສູງຂຶ້ນ; ຈາກນັ້ນ, ສະຫາຍຍັງແຈ້ງການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ທີ່ໄດ້ຮັບການເສີມຂະຫຍາຍທາງກວ້າງແລະທາງເລິກສະເໝີມາ, ສະພາບການພົ້ນເດັ່ນຂອງ ສປປ ລາວແລະສະພາແຫ່ງຊາດລາວ.

ໃນໂອກາດດຽວກັນ, ສະຫາຍ ຫງວຽນ ຮຸຍ ຕຽນ ກໍໄດ້ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ສະຫາຍປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ພ້ອມທັງລາຍງານໃຫ້ຊາບກ່ຽວກັບຜົນຂອງການພົບປະສອງຝ່າຍ ລະຫວ່າງສອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫວຽດນາມ-ລາວ ແລະ ທິດທາງຮ່ວມມືໃນຕໍ່ໜ້າ ເປັນຕົ້ນ ການສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳທີ່ໄດ້ເຊັນກັນໃນໄລຍະຜ່ານມາເຂົ້າສູ່ວຽກງານຕົວຈິງຢ່າງມີປະສິດທິຜົນ, ຈັດກອງປະຊຸມອົງການໄອຍະການບັນດາແຂວງທີ່ມີຊາຍແດນຮ່ວມກັນ ລາວ-ຫວຽດນາມ ຄັ້ງທີ 8 ໃນປີ 2026 ຢູ່ ສປປລາວ; ສືບຕໍ່ຊ່ວຍເຫຼືອກໍ່ສ້າງພະນັກງານໄອຍະການປະຊາຊົນ ສປປລາວ ຢູ່ ສສ. ຫວຽດນາມ; ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານໄອຍະການ ກ່ຽວກັບການຕ້ານອາຊະຍາກຳຂ້າມຊາດ, ແລະ ພັດທະນາລະບົບໄອຍະການດິຈິຕອນ ແລະ ການຫັນເປັນທັນສະໄໝ ໃຫ້ນັບມື້ນັບເຂັ້ມແຂງຍິ່ງຂຶ້ນ.

**ຜູ້ຊີ້ນຳ**
ທ່ານ ສົງຄຳ ວົງພະຈັນ

**ຄະນະຊີ້ອຳນວຍທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ